# ກຸ່ມທະນາຄານອົດສະຕາລີ ແລະ ນິວຊີແລນຈຳກັດ,
# ສາຂາປະເທດລາວ
# ເອກະສານລາຍງານການເງິນ ສຳລັບປີການບັນຊີສິ້ນສຸດ
# ວັນທີ 31 ທັນວາ 2019
# ແລະ
# ບົດລາຍງານຂອງຜູ້ກວດສອບບັນຊີອິດສະລະ

ເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບບັນຊີສະບັບນີ້ແມ່ນຖືກລາຍງານເປັນພາສາອັງກິດ. ສ່ວນສະບັບພາສາລາວ ແມ່ນເປັນພຽງສະບັບສົມທຽບເທົ່ານັ້ນ, ໃນກໍລະນີທີ່ບໍ່ສອດຄ່ອງ ແມ່ນຈະຍຶດຖືສະບັບພາສາອັງກິດເປັນຕົວຫຼັກ.

The Financial Statements and Independent Auditor's Report have been prepared in English. The Lao version is reference only; in case of discrepancies, the English version shall prevail.

## ກຸ່ມທະນາຄານອິດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ

**ສາລະບານ** **ໜ້າ**


| | | |
|---|---|---|
| 1 | ຂໍ້ມູນທົ່ວໄປກ່ຽວກັບສາຂາ | 1 |
| 2 | ຄວາມຮັບຜິດຊອບຂອງຄະນະຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ | 2-3 |
| 3 | ບົດລາຍງານຂອງຜູ້ກວດສອບບັນຊີອິດສະລະ | 4-6 |
| 4 | ໃບລາຍງານຖານະການເງິນ | 7-8 |
| 5 | ໃບລາຍງານຜົນການດຳເນີນງານ | 9-10 |
| 6 | ໃບລາຍງານສ່ວນປ່ຽນແປງທຶນ | 11 |
| 7 | ໃບລາຍງານກະແສເງິນສົດ | 12-13 |
| 8 | ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 14-39 |

## ກຸ່ມທະນາຄານອິດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ
## ຂໍ້ມູນທົ່ວໄປກ່ຽວກັບທະນາຄານ

| | |
|---|---|
| **ທະນາຄານ** | ກຸ່ມທະນາຄານອິດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ |
| **ໃບອະນຸຍາດລົງທຶນຕ່າງປະເທດ** | 007-15/ຜທ/ລທ4, ລົງວັນທີ 08 ທັນວາ 2015 |
| **ເລກທີ** | ໃບທະບຽນວິສາຫະກິດເລກທີ 05/ທຫລ ວັນທີ 21 ມັງກອນ 2019 |

| | | |
|---|---|---|
| **ທີມງານຜູ້ບໍລິຫານສາຂາ ອາວຸໂສ** | ທ່ານ ຣູເຟີສ ປິນໂຕ | ຜູ້ອຳນວຍການ |
| | ທ່ານ ອາຊາ ອາລີ | ຜູ້ອຳນວຍການຝ່າຍດຳເນີນງານ |
| | ທ່ານ ດິນອ່ານຕວນ ທາງວຽນ | ຜູ້ອຳນວຍການຝ່າຍຄວາມສ່ຽງ |
| | ທ່ານ ນາງ ສຸພະຈັນ ຄັນສີລາ | ຫົວໜ້າພະແນກພົວພັນລະຫວ່າງທະນາຄານ |
| | ທ່ານ ນາງ ນັນທະລາ ສີລິຈັນ | ຫົວໜ້າພະແນກການຄຸ້ມຄອງເງິນທຶນ |
| | ທ່ານ ນາງ ມຸກດາໄລ ໄຊຍະລາດ | ຫົວໜ້າພະແນກບຸກຄະລາກອນ |
| | ທ່ານ ນາງ ສີມວອນ ສີອາໄພ | ຫົວໜ້າພະແນກລະບຽບການ |
| | ທ່ານ ນາງ ລິ່ມລີວັນ ສີຊານິນ | ຝ່າຍສະໜັບສະໜູນລູກຄ້າ ແລະ ຊ່ວຍເຫຼືອສັງຄົມ |

| | |
|---|---|
| **ສຳນັກງານ** | ກຸ່ມທະນາຄານອິດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ<br>ຕຶກເອເອັນແຊັດ<br>33 ຖະໜົນ ລ້ານຊ້າງ ຕູ້ ປ.ນ 5001<br>ນະຄອນຫຼວງວຽງຈັນ, ສປປ ລາວ |
| **ຜູ້ກວດສອບບັນຊີ** | ບໍລິສັດ ເຄພີເອັມຈີລາວ ຈຳກັດ<br>ຊັ້ນ 10, ອາຄານ ໂຣໂຢລສະແຄລ<br>ຖະໜົນ ສາມແສນໄທ, ບ້ານ ຫນອງດ້ວງເໜືອ,<br>ເມືອງ ສີໂຄດຕະບອງ, ຕູ້ ປ.ນ. 6978,<br>ນະຄອນຫຼວງວຽງຈັນ, ສປປ ລາວ<br>ໂທ : +856 (21) 454240-7 |

## ຄວາມຮັບຜິດຊອບຂອງຄະນະຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະກຳມະການບໍລິຫານກຸ່ມທະນາຄານອົດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ ມີຄວາມຮັບຜິດຊອບຕໍ່ການກະກຽມເອກະສານລາຍງານການເງິນ ຖືກຕ້ອງຕາມຄວາມເປັນຈິງຂອງຖານະການເງິນ ຂອງທະນາຄານ ໃນວັນທີ 31 ທັນວາ 2019 ແລະ ໃບລາຍງານຜົນການດຳເນີນງານ ຈາກວັນທີ 8 ມີນາ ເຖິງວັນທີ 31 ທັນວາ , ໃບລາຍງານສ່ວນປ່ຽນແປງທຶນ ແລະ ຄັງສຳຮອງອື່ນໆ ແລະ ໃບລາຍງານກະແສເງິນສົດ ສຳລັບປີການບັນຊີສິ້ນສຸດ ທີ່ສອດຄ່ອງກັບລະບຽບການບັນຊີ ຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີ ໃນ ສປປ ລາວ. ໃນການກະກຽມເອກະສານລາຍງານການເງິນ ຜູ້ບໍລິຫານຂອງທະນາຄານ ຕ້ອງໄດ້ປະຕິບັດດັ່ງນີ້:

i) ນຳໃຊ້ນະໂຍບາຍການບັນຊີທີ່ເໝາະສົມ ພ້ອມເອກະສານປະກອບ ຢ່າງສົມເຫດສົມຜົນ, ພ້ອມການຕັດສິນຄາດຄະເນຢ່າງຮອບຄອບ ແລະ ພ້ອມນຳມາປະຕິບັດຢ່າງຕໍ່ເນື່ອງ;

ii) ສອດຄ່ອງກັບລະບຽບການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ, ໃນກໍລະນີຫາກມີຄວາມແຕກຕ່າງທາງຜົນປະໂຫຍດທີ່ແທ້ຈິງ, ແລະ ການນຳສະເໜີຕາມຄວາມເປັນຈິງ ເພື່ອໃຫ້ແນ່ໃຈວ່າເອກະສານລາຍງານເຫຼົ່ານີ້ໄດ້ເປີດເຜີຍຂໍ້ມູນຢ່າງເໝາະສົມ, ພ້ອມອະທິບາຍໃຫ້ເຫດຜົນຕົວຈິງທີ່ສົມເຫດສົມຜົນໃນເອກະສານລາຍງານການເງິນ;

iii) ເກັບຮັກສາເອກະສານການບັນທຶກບັນຊີຢ່າງຄົບຖ້ວນ ແລະ ລະບົບການຄຸ້ມຄອງພາຍໃນຢ່າງມີປະສິດທິພາບ;

iv) ປະຕິບັດຂັ້ນຕອນທີ່ສົມເຫດສົມຜົນ ເພື່ອຄວາມປອດໄພຂອງຊັບສິນຂອງສາຂາ ແລະ ເພື່ອຫຼີກລ່ຽງ ແລະ ກວດພົບການສໍ້ໂກງ, ຂໍ້ຜິດພາດ ແລະ ສິ່ງຜິດປົກກະຕິອື່ນໆ;

v) ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ທາງສາຂາຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າບໍ່ເໝາະສົມທີ່ທາງສາຂາຈະດຳເນີນງານຕໍ່ໄປ ໃນອະນາ ຄົດ; ແລະ

vi) ຄຸ້ມຄອງ ແລະ ຊີ້ນຳສາຂາຢ່າງມີປະສິດທິພາບ, ມີສ່ວນຮ່ວມໃນການຕັດສິນໃຈຕໍ່ບັນຫາສຳຄັນ ທີ່ອາດມີຜົນກະທົບຕໍ່ການດຳເນີນງານຂອງສາຂາ ແລະ ຜົນດຳເນີນງານ ແລະ ທະນາຄານຄວນສະແດງ ໃຫ້ເຫັນວ່າຜົນຂອງການຕັດສິນໃຈດັ່ງກ່າວນັ້ນ ແມ່ນສາມາດເຫັນຜົນໄດ້ໃນເອກະສານລາຍງານການເງິນຂອງສາຂາ.

ຄະນະບໍລິຫານຂໍຢັ້ງຢືນວ່າ ທາງຄະນະບໍລິຫານໄດ້ປະຕິບັດຕາມເງື່ອນໄຂທີ່ກ່າວມາຂ້າງເທິງຢ່າງຄົບຖ້ວນໃນການກະກຽມເອກະສານລາຍງານການເງິນ.

33 ຖະໜົນ ລ້ານຊ້າງ, ຕູ້ ປນ 5001, ນະຄອນຫຼວງວຽງຈັນ, ສປປ ລາວ | ໂທ: (+856 21) 222 700 | ແຟັກ: (+856 21) 213 513 | ອີເມວ: customercare.laos@anz.com
ສະວິບ ANZBALALA
33 Lane Xang Avenue PO Box 5001, Vientiane, Lao PDR | T. (+856 21) 222 700 | F. (+856 21) 213 513 | E. customercare.laos@anz.com
SWIFT ANZBALALA

## ການອະນຸມັດບົດລາຍງານການເງິນ

ຂ້າພະເຈົ້າ, ທ່ານ ຣູເຟີສ ປິນໂຕ ຕາງໜ້າຄະນະຜູ້ບໍລິຫານ ຂໍຮັບຮອງວ່າ: ເອກະສານລາຍງານການເງິນ ຈາກໜ້າ 7 ຫາ 39 ແມ່ນນໍາສະເໜີຢ່າງເໝາະສົມຕາມຄວາມເປັນຈິງ, ໃບລາຍງານຖານະການເງິນຂອງສາຂາ ນະວັນທີ 31 ທັນວາ 2019, ຜົນປະກອບການທາງການເງິນ, ໃບລາຍງານສ່ວນປ່ຽນແປງຂອງທຶນ ແລະ ຄັງສຳຮອງອື່ນໆ ແລະ ໃບລາຍງານກະແສເງິນສົດ ຈາກວັນທີ 8 ມີນາ ເຖິງວັນທີ 31 ທັນວາ 2019 ແມ່ນສອດຄ່ອງກັບລະບຽບການບັນຊີຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ.

*ເຊັນຕາງໜ້າ ຄະນະຜູ້ບໍລິຫານ*

ຣູເຟີສ ປິນໂຕ

ຜູ້ອຳນວຍການ

ວັນທີ: 31 ມີນາ 2020

33 ຖະໜົນ ລ້ານຊ້າງ, ຕູ້ ປນ 5001, ນະຄອນຫຼວງວຽງຈັນ, ສປປ ລາວ | ໂທ: (+856 21) 222 700 | ແຟັກ: (+856 21) 213 513 | ອີເມວ: customercare.laos@anz.com
ສະວິບ ANZBALALA
33 Lane Xang Avenue PO Box 5001, Vientiane, Lao PDR | T. (+856 21) 222 700 | F. (+856 21) 213 513 | E. customercare.laos@anz.com
SWIFT ANZBALALA

KPMG Lao Co.,Ltd.
10th Floor, Royal Square Office Building,
Samsenthai Road, Nongduong Nua Village,
Sikhotabong District, P.O.Box 6978,
Vientiane, Lao PDR
Tel +856 (21) 454240-7

ບໍລິສັດ ເຄພີເອັມຈີລາວ ຈໍາກັດ
ຊັ້ນ 10, ອາຄານ ໂຣໂຢລສະແຄລ
ຖະໜົນ ສາມແສນໄທ, ບ້ານ ຫນອງດ້ວງເໜືອ,
ເມືອງ ສີໂຄດຕະບອງ, ຕູ້ ປ.ນ. 6978,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ : +856 (21) 454240-7

## ບົດລາຍງານຂອງຜູ້ກວດສອບບັນຊີອິດສະລະ

### ເຖິງ: ສະພາບໍລິຫານທະນາຄານ ເອເອັນແຊັດ (ລາວ) ຈໍາກັດ.

*ຄໍາເຫັນ*

ພວກຂ້າພະເຈົ້າໄດ້ດໍາເນີນການກວດສອບບົດລາຍງານຖານະການເງິນຂອງກຸ່ມທະນາຄານອົດສະຕາລີ ແລະ ນິວຊີແລນ ຈໍາກັດ, ສາຂາປະເທດລາວ ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນໃນວັນທີ 31 ທັນວາ 2019, ໃບລາຍງານຜົນການດໍາເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ຄັງສໍາຮອງອື່ນໆ ແລະ ໃບລາຍງານກະແສເງິນສົດ ຈາກວັນທີ  8 ມີນາ ເຖິງວັນທີ 31 ທັນວາ 2019 ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນປະກອບດ້ວຍສັງລວມນະໂຍບາຍການບັນຊີທີ່ສໍາຄັນ ແລະ ເລື່ອງອື່ນໆ.

ໃນຄໍາເຫັນຂອງພວກຂ້າພະເຈົ້າ ເຫັນວ່າເອກະສານລາຍງານການເງິນໄດ້ນໍາສະເໜີຖືກຕ້ອງຕາມທີ່ຄວນໃນສາລະສໍາຄັນ, ຂອງຖານະການເງິນຂອງສາຂາ ນະວັນທີ 31 ທັນວາ 2019 ຜົນການດໍາເນີນງານທາງການເງິນ ແລະ ກະແສເງິນສົດ ຈາກວັນທີ  8 ມີນາ ເຖິງວັນທີ 31 ທັນວາ 2019 ສອດຄ່ອງກັບລະບຽບການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ

*ພື້ນຖານການສະແດງຄວາມເຫັນ*

ພວກຂ້າພະເຈົ້າໄດ້ດໍາເນີນການກວດສອບບັນຊີ ຕາມມາດຕະຖານການກວດສອບບັນຊີສາກົນ (“ISAs”). ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ໄດ້ກ່າວໄວ້ໃນສ່ວນຂອງ *ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີຕໍ່ເອກະສານລາຍງານການເງິນ* ໃນການລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າມີຄວາມເປັນເອກະລາດຈາກທະນາຄານໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີ ສໍາລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ ແລະ ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບດ້ານຈັນຍາບັນອື່ນໆ ເຊິ່ງເປັນໄປຕາມຂໍ້ກໍານົດເຫຼົ່ານັ້ນ. ພວກຂ້າພະເຈົ້າເຊື່ອວ່າຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອໃຊ້ເປັນເກນໃນການ ສະແດງຄວາມເຫັນຂອງພວກຂ້າພະເຈົ້າ.

KPMG Lao Co., Ltd. a Company licensed under the Foreign Investment Law of Lao PDR, is a member of KPMG International, a Swiss cooperative.

*ຄວາມຮັບຜິດຊອບຂອງຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ*

ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີຢ່າງສົມເຫດສົມຜົນຂອງເອກະສານລາຍງານການເງິນ ເພື່ອໃຫ້ສອດຄ່ອງກັບລະບຽບການບັນຊີຂອງທະນາຄານ ແຫ່ງ ສປປລາວ ແລະ ຫຼັກການບັນຊີໃນ ສປປລາວ ແລະ ຮັບຜິດຊອບກ່ຽວກັບການຄວບຄຸມພາຍໃນທີ່ຜູ້ບໍລິຫານພິຈາລະນາວ່າຈຳເປັນເພື່ອໃຫ້ສາມາດກະກຽມເອກະສານລາຍງານການເງິນທີ່ປາດສະຈາກການສະແດງຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງ ອັນເປັນສາລະສຳຄັນ ບໍ່ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນຜູ້ບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດ ຂອງສາຂາດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ເປີດເຜີຍເລື່ອງທີ່ກ່ຽວກັບການດຳເນີນງານຕໍ່ເນື່ອງຕາມຄວາມເໝາະສົມ ແລະ ການນຳໃຊ້ຫຼັກການບັນຊີສຳລັບການດຳເນີນງານຕໍ່ເນື່ອງ ເວັ້ນແຕ່ຜູ້ບໍລິຫານມີຄວາມຕັ້ງໃຈທີ່ຈະເລີກ ຫຼື ຢຸດດຳເນີນງານ ຫຼື ບໍ່ສາມາດດຳເນີນງານຕໍ່ເນື່ອງໄປໄດ້.

*ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີ ຕໍ່ການກວດສອບເອກະສານລາຍງານການເງິນ*

ການກວດສອບຂອງພວກຂ້າພະເຈົ້າ ມີວັດຖຸປະສົງເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍລວມແມ່ນປາດສະຈາກການສະແດງຂໍ້ມູນບິດເບືອນຈາກຄວາມເປັນຈິງອັນເປັນສາລະສຳຄັນ, ບໍ່ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ແລະ ສະເໜີລາຍງານຂອງຜູ້ກວດສອບບັນຊີ ເຊິ່ງລວມຄວາມເຫັນຂອງພວກຂ້າພະເຈົ້າຢູ່ນຳຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າ ການປະຕິບັດການກວດສອບຕາມມາດຕະຖານການກວດສອບບັນຊີຈະສາມາດກວດພົບຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງອັນເປັນສາລະສຳຄັນ ທີ່ມີຢູ່ໄດ້ສະເໝີໄປຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າມີສາລະສຳຄັນເມື່ອຄາດການໄດ້ຢ່າງສົມເຫດສົມຜົນວ່າລາຍການທີ່ບິດເບືອນຈາກຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນຈະມີຜົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກຂ້າພະເຈົ້າຕາມມາດຕະຖານການກວດສອບບັນຊີ ຂ້າພະເຈົ້າໄດ້ໃຊ້ດຸນພິນິດ ແລະ ການສັງເກດ ແລະ ສົງໄສຢ່າງຜູ້ປະກອບວິຊາຊີບຕະຫຼອດການກວດສອບການປະຕິບັດງານຂອງພວກຂ້າພະເຈົ້າ ລວມເຖິງ:

- ລະບຸ ແລະ ປະເມີນຄວາມສ່ຽງຈາກການສະແດງຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງອັນເປັນສາລະສຳຄັນ ໃນເອກະສານລາຍງານການເງິນ, ບໍ່ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ອອກແບບ ແລະ ປະຕິບັດງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ໄດ້ຫຼັກຖານການກວດສອບບັນຊີທີ່ພຽງພໍ ແລະ ເໝາະສົມເພື່ອເປັນເກນໃນການສະແດງຄວາມເຫັນຂອງພວກຂ້າພະເຈົ້າ ຄວາມສ່ຽງທີ່ບໍ່ພົບຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງອັນເປັນສາລະສຳຄັນຊຶ່ງເປັນຜົນຈາກການສໍ້ໂກງຈະສູງກວ່າຂໍ້ຜິດພາດເນື່ອງມາຈາກການສໍ້ໂກງອາດຈະກ່ຽວກັບການສົມຮູ້ຮ່ວມຄິດການປອມແປງເອກະສານຫຼັກຖານ ການຕັ້ງໃຈລະເວັ້ນການສະແດງຂໍ້ມູນການສະແດງຂໍ້ມູນທີ່ບໍ່ກົງກັບຄວາມເປັນຈິງ ຫຼື ການແຊກແຊງການຄວບຄຸມພາຍໃນ.

KPMG Lao Co., Ltd. a Company licensed under the Foreign Investment Law of Lao PDR, is a member of KPMG International, a Swiss cooperative.

- ທຳຄວາມເຂົ້າໃຈໃນລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບວິທີການກວດສອບທີ່ມີຄວາມເໝາະສົມກັບສະພາບການຕ່າງໆ, ແຕ່ບໍ່ແມ່ນເພື່ອຈຸດປະສົງໃນການສະແດງຄວາມເຫັນຕໍ່ຄວາມມີປະສິດທິຜົນຂອງການຄວບຄຸມພາຍໃນຂອງສາຂາ.

- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການປະມານການທາງບັນຊີ ແລະ ການເປີດເຜີຍຂໍ້ມູນທີ່ທີ່ກ່ຽວຂ້ອງຊຶ່ງຖືກນຳໃຊ້ໂດຍຜູ້ບໍລິຫານ.

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການໃຊ້ຫຼັກການບັນຊີສຳລັບຄວາມສືບເນື່ອງໃນການດຳເນີນທຸລະກິດຂອງຜູ້ບໍລິຫານຈາກຫຼັກຖານການກວດສອບບັນຊີທີ່ໄດ້ຮັບ ສະຫຼຸບວ່າມີຄວາມບໍ່ແນ່ນອນທີ່ມີສາລະສຳຄັນກ່ຽວກັບເຫດການ ຫຼື ສະຖານະການທີ່ອາດເປັນເຫດໃຫ້ເກີດຂໍ້ສົງໄສຢ່າງມີສາລະສຳຄັນຕໍ່ຄວາມສາມາດຂອງສາຂາ ຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກວ່າພວກຂ້າພະເຈົ້າໄດ້ຂໍ້ສະຫຼຸບວ່າ ມີຄວາມບໍ່ແນ່ນອນ, ທີ່ມີສາລະສຳຄັນພວກຂ້າພະເຈົ້າຕ້ອງໄດ້ກ່າວໄວ້ໃນບົດລາຍງານຂອງຜູ້ກວດສອບບັນຊີຂອງພວກຂ້າພະເຈົ້າເຖິງການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ຫຼື ຖ້າການເປີດເຜີຍດັ່ງກ່າວບໍ່ພຽງພໍຄວາມເຫັນຂອງພວກຂ້າພະເຈົ້າຈະປ່ຽນແປງໄປ, ຂໍ້ສະຫຼຸບຂອງພວກຂ້າພະເຈົ້າຂຶ້ນຢູ່ກັບຫຼັກຖານການກວດສອບບັນຊີທີ່ໄດ້ຮັບຈົນເຖິງວັນທີໃນບົດລາຍງານກວດສອບບັນຊີຂອງພວກຂ້າພະເຈົ້າ. ຢ່າງໃດກໍຕາມ, ເຫດການ ຫຼື ສະຖານະການໃນອະນາຄົດອາດເປັນເຫດໃຫ້ສາຂາຕ້ອງຢຸດການດຳເນີນງານຕໍ່ເນື່ອງ.

- ປະເມີນການນຳສະເໜີໂຄງສ້າງ ແລະ ເນື້ອຫາຂອງເອກະສານລາຍງານການເງິນໂດຍລວມ, ລວມເຖິງການເປີດເຜີຍວ່າເອກະສານລາຍງານການເງິນເພື່ອສະແດງລາຍການ ແລະ ເຫດການໃນຮູບແບບທີ່ເຮັດໃຫ້ການນຳສະເໜີຂໍ້ມູນຖືກຕ້ອງຕາມທີ່ຄວນ.

ພວກຂ້າພະເຈົ້າຕິດຕໍ່ກັບຜູ້ທີ່ມີໜ້າທີ່ໃນການກຳກັບດູແລ ທີ່ກ່ຽວຂ້ອງກັບບັນດາບັນຫາອື່ນໆ, ຂອບເຂດ ແລະ ໄລຍະເວລາໃນການກວດສອບຕາມທີ່ໄດ້ວາງແຜນໄວ້ປະເດັນທີ່ມີສາລະສຳຄັນທີ່ພົບຈາກການກວດສອບລວມເຖິງຂໍ້ບົກຜ່ອງທີ່ມີສາລະສຳຄັນໃນລະບົບການຄວບຄຸມພາຍໃນຊຶ່ງພວກຂ້າພະເຈົ້າໄດ້ກວດພົບໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

KPMG Lao Co., Ltd

**ບໍລິສັດ ເຄພີເອັມຈີ ລາວ ຈຳກັດ**

ນະຄອນຫຼວງວຽງຈັນ, ສປປ ລາວ

ວັນທີ 31 ມີນາ 2020

KPMG Lao Co., Ltd. a Company licensed under the Foreign Investment Law of Lao PDR, is a member of KPMG International, a Swiss cooperative.

## ກຸ່ມທະນາຄານອິກສະຕາລີ ແລະ ນີວຊີແລນຈຳກັດ, ສາຂາປະເທດລາວ

## ໃບລາຍງານຖານະການເງິນ

| | ບົດ ອະທິບາຍ | 2019 (ລ້ານກີບ) |
|---|---|---|
| **ຊັບສິນ** | | |
| ເງິນສົດ | *5,23* | 5.231 |
| ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | 572.859 |
| ເງິນໜີ້ຕ້ອງຮັບຈາກສຳນັກງານໃຫຍ່ ແລະ ສາຂາອື່ນ | *6* | 293.803 |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | *6* | 279.056 |
| ເງິນຝາກຕາມລະບຽບການກັບທະນາຄານກາງ | *7* | 66.282 |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ, ສຸດທິ ເງິນແຮ | *8* | 379.300 |
| ຊັບສິນບັດຄົງທີທີ່ມີຕົວຕົນ | *9* | 2.489 |
| ສິດນຳໃຊ້ຊັບສິນ | *10* | 6.786 |
| ຊັບສິນອາກອນລໍຖ້າສະສາງ | *11* | 3.147 |
| ຊັບສິນອື່ນໆ | *12* | 12.291 |
| **ລວມຍອດ ຊັບສິນ** | | **1.048.385** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

## ກຸ່ມທະນາຄານອົດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ

ໃບລາຍງານຖານະການເງິນ

| | ບົດ ອະທິບາຍ | 2019 (ລ້ານກີບ) |
|---|---|---|
| **ໜີ້ສິນ, ທຶນ ແລະ ຄັງແຮສຳຮອງອື່ນໆ** | | |
| **ໜີ້ສິນ** | | |
| ເງິນຝາກຈາກລູກຄ້າ | *13* | 501.952 |
| ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | *14* | 81.479 |
| ໜີ້ສິນທາງອາກອນ | *15* | 4.817 |
| ໜີ້ສິນສັນຍາເຊົ່າ | | 6.518 |
| ໜີ້ສິນອື່ນໆ | *16* | 270.942 |
| **ລວມຍອດໜີ້ສິນ** | | **865.708** |
| | | |
| **ທຶນ ແລະ ຄັງແຮສຳຮອງອື່ນໆ** | | |
| ທຶນຈົດທະບຽນຖອກແລ້ວ | *17* | 150.000 |
| ຄັງສຳຮອງຕາມລະບຽບການ | *18* | 3.081 |
| ເງິນແຮສຳຮອງທົ່ວໄປສຳລັບກິດຈະກຳສິນເຊື່ອ | | 1.869 |
| ກຳໄລສະສົມ | | 27.727 |
| **ລວມຍອດທຶນ ແລະ ຄັງແຮສຳຮອງອື່ນໆ** | | **182.677** |
| **ລວມໜີ້ສິນ, ທຶນ ແລະ ຄັງແຮສຳຮອງອື່ນໆ** | | **1.048.385** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

ກຸ່ມທະນາຄານອົດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ

ໃບລາຍງານຜົນການດຳເນີນງານ

| | ບົດ ອະທິບາຍ | ວັນທີ 8 ມີນາ ຫາ 31 ທັນວາ 2019 (ລ້ານກີບ) |
|---|---|---|
| **ລາຍຮັບຈາກດອກເບ້ຍ** | | |
| ດອກເບ້ຍຈາກເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ | *19* | 12.977 |
| ດອກເບ້ຍຈາກທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | 3.388 |
| **ລວມລາຍຮັບດອກເບ້ຍ** | | **16.365** |
| **ລາຍຈ່າຍດອກເບ້ຍ** | | |
| ດອກເບ້ຍເງິນຝາກ | *20* | (1.045) |
| ດອກເບ້ຍເງິນທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | (2.237) |
| ດອກເບ້ຍເງິນກູ້ຢືມລະຫວ່າງທະນາຄານໃນເຄືອ | | (6.031) |
| **ລວມລາຍຈ່າຍດອກເບ້ຍ** | | **(9.313)** |
| **ລາຍຮັບດອກເບ້ຍສຸດທິ** | | **7.052** |
| ລາຍຮັບ ຄ່າທຳນຽມ ແລະ ຄ່າບໍລິການ | | 3.701 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | | (397) |
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ, ສຸດທິ** | *21* | **3.304** |
| **ລາຍຮັບອື່ນໆ** | | |
| ກຳໄລຈາກການແລກປ່ຽນເງິນຕາ | | 17.227 |
| ລາຍຮັບອື່ນໆ | | 1.535 |
| ກຳໄລ(ຂາດທຶນ)ສຸດທິຈາກການສະສາງຊັບສິນບັດຄົງທີ່ | *26* | 51.958 |
| **ລວມລາຍຮັບອື່ນໆ** | | **70.720** |
| **ລາຍຮັບ ກ່ອນລາຍຈ່າຍ ທີ່ບໍ່ແມ່ນດອກເບ້ຍ, ບັນຊີໜີ້ເສຍ ແລະ ລາຍຈ່າຍອາກອນກຳໄລ** | | **81.076** |

**ກຸ່ມທະນາຄານອິດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ**

**ໃບລາຍງານຜົນການດຳເນີນງານ**

| | | |
|---|---|---|
| **ລາຍຈ່າຍການດຳເນີນງານ** | | |
| ລາຍຈ່າຍສ່ວນບຸກຄົນ | | (11.864) |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | | (908) |
| ລາຍຈ່າຍອື່ນໆ | | (15.652) |
| ເງິນແຮສຳລັບໜີ້ສູນ ແລະ ໜີ້ສົງໄສ ເງິນໃຫ້ກູ້ ແລະ ເງິນລ່ວງໜ້າ | | |
| ເງິນແຮທົ່ວໄປ | | (716) |
| ເງິນແຮສະເພາະ | | (11.247) |
| **ລວມລາຍຈ່າຍການດຳເນີນງານ** | | **(40.387)** |
| **ກຳໄລກ່ອນການຈ່າຍອາກອນກຳໄລ** | | **40.689** |
| ລາຍຈ່າຍອາກອນກຳໄລ | *22* | (9.881) |
| **ກຳໄລໃນປີ** | | **30.808** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

## ກຸ່ມທະນາຄານອິດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ

**ໃບລາຍງານສ່ວນປ່ຽນແປງທຶນ ແລະ ຄັງສຳຮອງ**

| | ທຶນຈົດທະບຽນຖອກແລ້ວ *(ລ້ານກີບ)* | ກຳໄລສະສົມ (ຂາດທຶນສະສົມ) *(ລ້ານກີບ)* | ຄັງສຳຮອງຕາມລະບຽບການ *(ລ້ານກີບ)* | ເງິນແຮທົ່ວໄປສຳລັບສິນເຊື່ອ *(ລ້ານກີບ)* | ລວມ *(ລ້ານກີບ)* |
|---|---|---|---|---|---|
| **ໂອນ ວັນທີ 8 ມີນາ 2019*** | **150.000** | **-** | **-** | **1.153** | **151.153** |
| ປ່ຽນແປງໃນເງິນແຮທົ່ວໄປ | - | - | - | 716 | 716 |
| ກຳໄລໃນປີ | - | 30.808 | - | - | 30.808 |
| ໂອນໄປຄັງສະສົມຕາມລະບຽບການ | - | (3.081) | 3.081 | - | - |
| **ຍອດເຫຼືອ ໃນວັນທີ 31 ທັນວາ 2019** | **150.000** | **27.727** | **3.081** | **1.869** | **182.677** |

*ອີງຕາມອະທິບາຍເລກທີ 1 ເຊິ່ງອະທິບາຍເຖິງການໂອນທຶນ

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

**ກຸ່ມທະນາຄານອົດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ**

**ໃບລາຍງານກະແສເງິນສົດ**

| | ບົດ ອະທິບາຍ | 2019 (ລ້ານກີບ) |
|---|---|---|
| ກຳໄລກ່ອນຫັກອາກອນກຳໄລ | | 40.689 |
| *ດັດແກ້ສຳລັບ:* | | |
| ລາຍຮັບດອກເບ້ຍ | | (16.365) |
| ລາຍຈ່າຍດອກເບ້ຍ | | 9.313 |
| ເງິນແຮສຳລັບໜີ້ສົງໄສຈະສູນ | | 11.963 |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | | 908 |
| (ກຳໄລ)ຈາກການສະສາງຊັບສົມບັດຄົງທີ່ | | (51.958) |
| **ຂາດທຶນຈາກການດຳເນີນງານກ່ອນການປ່ຽນແປງຊັບສິນ ແລະ ໜີ້ສິນຈາກການດຳເນີນງານ** | | **(5.450)** |
| *ການປ່ຽນແປງໃນຊັບສິນ / ໜີ້ສິນ ຈາກການດຳເນີນງານ* | | |
| ປ່ຽນແປງໃນເງິນຝາກຕາມລະບຽບການ | | (48.304) |
| ປ່ຽນແປງໃນເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ | | (389.394) |
| ປ່ຽນແປງໃນຊັບສິນອື່ນໆ | | (15.643) |
| ປ່ຽນແປງຂອງເງິນຝາກຈາກລູກຄ້າ | | 501.953 |
| ປ່ຽນແປງໃນເງິນຝາກຈາກທະນາຄານອື່ນ | | 81.478 |
| ປ່ຽນແປງໃນເງິນຝາກກັບທະນາຄານອື່ນ | | (80.001) |
| ປ່ຽນແປງໃນໜີ້ສິນອື່ນໆ | | 264.985 |
| ດອກເບ້ຍທີ່ໄດ້ຮັບ | | 16.571 |
| ດອກເບ້ຍທີ່ໄດ້ຈ່າຍ | | (8.421) |
| ຈ່າຍອາກອນກຳໄລ | | - |
| **ກະແສເງິນສົດສຸດທິຈາກການດຳເນີນທຸລະກິດ** | | **317.774** |
| ***ກະແສເງິນສົດຈາກກິດຈະກຳການລົງທຶນ*** | | |
| ຊື້ຊັບສົມບັດຄົງທີ່ | | (53) |
| ເງິນໄດ້ຮັບຈາກການສະສາງຊັບສິນ | | 48.660 |
| **ເງິນສົດສຸດທິຈາກກິດຈະກຳການລົງທຶນ** | | **48.607** |

**ກຸ່ມທະນາຄານອົດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ**

**ໃບລາຍງານກະແສເງິນສົດ**

| | | |
|---|---|---|
| *ກະແສເງິນສົດຈາກກິດຈະການເງິນ* | | |
| ຈ່າຍໜີ້ສິນສັນຍາເຊົ່າ | | (314) |
| ປະກອບສ່ວນທຶນ | | 150.000 |
| **ເງິນສົດສຸດທິ ຈາກກິດຈະກຳການເງິນ** | | **149.686** |
| **ປ່ຽນແປງສຸດທິໃນເງິນສົດ ແລະ ທຽບເທົ່າເງິນສົດ** | | **516.067** |
| ເງິນສົດ ແລະ ທຽບເທົ່າເງິນສົດໃນວັນທີ 1 ມັງກອນ | | - |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນວັນທີ 31 ທັນວາ** | *23* | **516.067** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

## ກຸ່ມທະນາຄານອິດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ
## ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ
## ສຳລັບປີສິ້ນສຸດ 31 ທັນວາ 2019

| ບົດອະທິບາຍ | ເນື້ອໃນ |
|---|---|
| 1 | ຂໍ້ມູນທົ່ວໄປ |
| 2 | ພື້ນຖານການກະກຽມເອກະສານລາຍງານການເງິນ |
| 3 | ການປ່ຽນແປງນະໂຍບາຍການບັນຊີ |
| 4 | ສັງລວມນະໂຍບາຍການບັນຊີທີ່ສຳຄັນ |
| 5 | ເງິນສົດ |
| 6 | ໜີ້ຕ້ອງຮັບຈາກສຳນັກງານໃຫຍ່ ແລະ ສາຂາອື່ນ ແລະ ທະນາຄານອື່ນໆ |
| 7 | ເງິນຝາກຕາມລະບຽບການກັບທະນາຄານກາງ |
| 8 | ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ, ສຸດທິຂອງເງິນແຮສະເພາະ |
| 9 | ຊັບສິນບັດຄົງທີ່ມີຕົວຕົນ |
| 10 | ສິດໃນການນຳໃຊ້ຊັບສິນ |
| 11 | ຊັບສິນອາກອນເຍື້ອນຊຳລະ |
| 12 | ຊັບສິນອື່ນໆ |
| 13 | ເງິນຝາກຈາກລູກຄ້າ |
| 14 | ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ |
| 15 | ໜີ້ສິນທາງອາກອນ |
| 16 | ໜີ້ສິນອື່ນໆ |
| 17 | ທຶນຈົດທະບຽນຖອກແລ້ວ |
| 18 | ຄັງສຳຮອງຕາມລະບຽບການ |
| 19 | ລາຍຮັບດອກເບ້ຍ |
| 20 | ລາຍຈ່າຍດອກເບ້ຍ |
| 21 | ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ, ສຸດທິ |
| 22 | ອາກອນກຳໄລ |
| 23 | ເງິນສົດ ແລະ ທຽບເທົ່າເງິນສົດ |
| 24 | ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ |
| 25 | ພາລະຜູກພັນ |
| 26 | ການຂາຍຊັບສິນ |
| 27 | ເຫດການທີ່ເກີດຂຶ້ນພາຍຫຼັງ |

## 1. ຂໍ້ມູນທົ່ວໄປ

ກຸ່ມທະນາຄານອົດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ (“ສາຂາ”) ເປັນສາຂາທຸລະກິດຕ່າງປະເທດລົງທຶນ 100% ເຊິ່ງສ້າງຕັ້ງຂຶ້ນໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (“ສປປ ລາວ”) ແລະ ມີສຳນັກງານຕັ້ງຢູ່ທີ່ຕຶກ ເອເອັນແຊັດ, 33, ຖະໜົນລ້ານຊ້າງ, ຕູ້ໄປສະນີ 5001, ນະຄອນຫຼວງວຽງຈັນ, ສປປ ລາວ.

ສາຂາ ໄດ້ດຳເນີນທຸລະກິດພາຍໃຕ້ໃບອະນຸຍາດການລົງທຶນຕ່າງປະເທດ ເລກທີ 05/ທຫລ ລົງວັນທີ 21ມັງກອນ 2019 ເຊິ່ງອອກໃຫ້ໂດຍທະນາຄານແຫ່ງ ສປປ ລາວ, ໃບທະບຽນວິສາຫະກິດເລກທີ 0213/ຈທວ ລົງວັນທີ 18 ກຸມພາ 2019 ອອກໂດຍຫ້ອງການທະບຽນວິສາຫະກິດ ກະຊວງອຸດສາຫະກຳ ແລະ ການການຄ້າ ແລະ ໃບທະບຽນລົງທຶນເລກທີ 007-19/ກຊຜທ.ລທ4, ລົງວັນທີ 22 ພຶດສະພາ 2019 ອອກໂດຍກະຊວງແຜນການ ແລະ ການລົງທຶນ.

ຊັບສິນ ແລະ ໜີ້ສິນບາງສ່ວນໄດ້ຖືກໂອນມາຈາກທະນາຄານຕົວແທນນະວັນທີ 8 ມີນາ 2019 ແລະ ບັນດາຊັບສິນດັ່ງກ່າວໄດ້ຮັບການຮັບການສະ ໜອງທຶນຜ່ານເງິນກູ້ຢືມທະນາຄານຕົວແທນທີ່ມີມູນຄ່າສາມາດກູ້ໄດ້ບໍ່ເກີນ 40 ລ້ານໂດລາ ສ່ວນຊັບສິນ ແລະ ໜີ້ສິນທີ່ຍັງເຫຼືອຖືກໂອນໄປວັນທີ 30 ກັນຍາ 2019

ກຸ່ມເອເອັນແຊັດໄດ້ຖອກຕົ້ນທຶນຈົດທະບຽນຈຳນວນ 150 ຕື້ກີບໃຫ້ສາຂາໄປຊຳລະເງິນກູ້ໃຫ້ທະນາຄານຕົວແທນໃນຈຳນວນທຽບເທົ່າກັນໃນວັນທີ 30 ກັນຍາ 2019

ສາຂາຈະຈ່າຍຄືນເງິນກູ້ທີ່ເຫຼືອ ຈຳນວນ 150 ຕື້ກີບ ໃຫ້ແກ່ທະນາຄານຕົວແທນ ເມື່ອການກວດສອບອາກອນຂອງທະນາຄານຕົວແທນສຳເລັດແລ້ວ ແລະ ຈະເພີ່ມຕົ້ນທຶນຈົດທະບຽນຈຳນວນດຽວກັນທີ່ຈະໄດ້ຮັບຈາກກຸ່ມເອເອັນແຊັດ.

ການບໍລິການຫຼັກຂອງສາຂາແມ່ນອຳນວຍຄວາມສະດວກການໃຫ້ບໍລິການທາງດ້ານການເງິນ ແລະ ການທະນາຄານ ໃນ ສປປ ລາວ.

ໃນວັນທີ 31 ທັນວາ 2019, ສາຂາ ມີພະນັກງານທັງໝົດ 36 ຄົນ

ໃນລະຫວ່າງປີ 2019 ສາຂາທະນາຄານໄດ້ມີການປ່ຽນຜູ້ອຳນວຍການ ແລະ ຄະນະບໍລິຫານດັ່ງລຸ່ມນີ້:

ສະມາຊິກຄະນະຜູ້ອຳນວຍການທີ່ໄດ້ຮັບການແຕ່ງຕັ້ງ ແລະ ລາອອກ:

| ຊື່ | ຕຳແໜ່ງ | ວັນທີແຕ່ງຕັ້ງ/ລາອອກ |
|---|---|---|
| ທ່ານ ເປັມ ຄຳມຸງຄຸນ | ຫົວໜ້າພະແນກການເງິນ | ລາອອກໃນວັນທີ 27 ທັນວາ 2019 |
| ທ່ານ ໂຊພີ ແກ້ວ | ຜູ້ອຳນວຍການຝ່າຍດຳເນີນງານ | ລາອອກໃນວັນທີ 30 ເມສາ 2019 |
| ທ່ານ ອາຊາ ອາລີ | ຜູ້ອຳນວຍການຝ່າຍດຳເນີນງານ | ແຕ່ງຕັ້ງໃນວັນທີ 05 ມິຖຸນາ 2019 |

## 2. ພື້ນຖານການກະກຽມເອກະສານລາຍງານການເງິນ

### (ກ) ຫຼັກການພື້ນຖານບັນຊີທົ່ວໄປ

#### *(i)* ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນທີ່ເຮັດຂຶ້ນສະແດງເປັນຫົວໜ່ວຍລ້ານລາວກີບ ("ລ້ານກີບ") ໂດຍສອດຄ່ອງກັບ ດຳລັດເລກທີ 02/ນຍ ຂອງນາຍົກລັດຖະມົນຕີແຫ່ງ ສປປລາວ ລົງວັນທີ 22 ມີນາ 2000, ກົດໝາຍບັນຊີວິສາຫະກິດ ຂອງ ສປປ ລາວ ແລະ ຫຼັກການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ. ເປັນສະກຸນເງິນທີ່ໃຊ້ໃນການດຳເນີນງານຂອງສາຂາ.

ເອກະສານລາຍງານການເງິນໄດ້ຖືກກະກຽມໃຫ້ສອດຄ່ອງກັບຫຼັກການບັນຊີຂອງທະນາຄານແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ, ເຊິ່ງອາດຈະແຕກຕ່າງຈາກການລາຍງານຕາມມາດຕະຖານການລາຍງານການເງິນແບບສາກົນ ແລະ ລະບຽບຫຼັກການບັນຊີທີ່ມີການຍອມຮັບ ແລະ ປະຕິບັດໃນປະເທດອື່ນໆ. ດັ່ງນັ້ນ, ເອກະສານລາຍງານການເງິນນີ້ ບໍ່ມີຈຸດປະສົງທີ່ຈະສະແດງຖານະການເງິນ, ຜົນຂອງການດຳເນີນງານ, ການປ່ຽນແປງຂອງທຶນ, ກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍຕາມຫຼັກການບັນຊີທີ່ຖືກຍອມຮັບຕາມນະໂຍບາຍບັນຊີ ແລະ ການປະຕິບັດໂດຍທົ່ວໄປໃນບັນດາປະເທດ ແລະ ຂົງເຂດອື່ນໆທີ່ນອກເໜືອຈາກ ສປປ ລາວ. ນອກຈາກນີ້, ເອກະສານລາຍງານການເງິນສະບັບນີ້ ບໍ່ໄດ້ຖືກສ້າງຂຶ້ນໃຫ້ຜູ້ທີ່ບໍ່ຮູ້ກ່ຽວກັບນະໂຍບາຍບັນຊີ, ການດຳເນີນງານ ແລະ ການປະຕິບັດກົດໝາຍ ແລະ ຂໍ້ກຳນົດຂອງ ສປປ ລາວ.

ສາຂາເປັນສາຂາທຸລະກິດຕ່າງປະເທດລົງທຶນ 100% ຊຶ່ງດຳເນີນການຢູ່ໃນ ສປປ ລາວ. ເອກະສານລາຍງານການເງິນແມ່ນຖືກກະກຽມຈາກການບັນທຶກຂອງສາຂາ ແລະ ສະທ້ອນເຖິງທຸລະກຳທີ່ບັນທຶກຢູ່ພາຍໃນເທົ່ານັ້ນ, ສາຂາມີລາຍການທຸລະກຳທີ່ສຳຄັນ ແລະ ຍອດເງິນໃນບັນຊີກັບສຳນັກງານໃຫຍ່ ແລະ ສາຂາອື່ນ.

ເອກະສານລາຍງານການເງິນ ແມ່ນໄດ້ຖືກອະນຸມັດໂດຍຄະນະຜູ້ບໍລິຫານໃນວັນທີ 31 ມີນາ 2020

#### *(ii)* ພື້ນຖານການປະເມີນ

ເອກະສານລາຍງານການເງິນແມ່ນໄດ້ກະກຽມຂຶ້ນຕາມຫຼັກການຕົ້ນທຶນເດີມ ຍົກເວັ້ນແຕ່ທີ່ໄດ້ກ່າວໄວ້ໃນນະໂຍບາຍການບັນຊີ. ນະໂຍບາຍການບັນຊີແມ່ນໄດ້ຖືກນຳໃຊ້ຢ່າງສອດຄ່ອງກັບສາຂາ

#### ການປະມານການ ແລະ ໃຊ້ດຸນພິນິດ

ໃນການກະກຽມເອກະສານລາຍງານການເງິນຂອງສາຂາ, ຜູ້ບໍລິຫານຕ້ອງໄດ້ໃຊ້ດຸນພິນິດ, ການປະມານ ແລະ ຂໍ້ສົມມຸດຕິຖານຫຼາຍປະການຕາມຄວາມຮູ້ເຂົ້າໃຈຂອງຄະນະຜູ້ບໍລິຫານຕໍ່ສະພາບປະຈຸບັນ ແລະ ການປະຕິບັດທີ່ມີຜົນກະທົບຕໍ່ການກຳນົດນະໂຍບາຍການບັນຊີ ແລະ ການລາຍງານຈຳນວນເງິນທີ່ກ່ຽວກັບ ຊັບສິນ, ໜີ້ສິນ, ລາຍຮັບ, ລາຍຈ່າຍ ແລະ ການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນໃນວັນທີລາຍງານ.

ການຄາດຄະເນ ແລະ ການສົມມຸດຖານ ແມ່ນໄດ້ຖືກທົບທວນຄືນຢ່າງຕໍ່ເນື່ອງ. ຜົນໄດ້ຮັບທີ່ແທ້ຈິງອາດຈະແຕກຕ່າງຈາກການປະເມີນຂອງການບໍລິຫານ ແລະ ສ່ວນແຕກຕ່າງເຫຼົ່ານັ້ນອາດຈະມີຄວາມຈຳເປັນທີ່ຈະຕ້ອງມີການແກ້ໄຂທີ່ໃຫ້ເປັນທີ່ຍອມຮັບໃນໄລຍະທີ່ການປະເມີນຖືກມີການແກ້ໄຂ ແລະ ໃນໄລຍະທີ່ຈະໄດ້ຮັບຜົນກະທົບ ໃນອະນາຄົດ.

### (ຂ) ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດ

ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດຈະຖືກປ່ຽນເປັນສະກຸນເງິນທີ່ນຳໃຊ້ໃນການດຳເນີນງານໃນອັດຕາແລກປ່ຽນໃນວັນທີທີ່ລາຍການເຄື່ອນໄຫວດັ່ງກ່າວເກີດຂຶ້ນ.

ຊັບສິນ ແລະ ໜີ້ສິນ ທີ່ບໍ່ເປັນຕົວເງິນ ເຊິ່ງເກີດຈາກລາຍການບັນຊີທີ່ເປັນເງິນຕາຕ່າງປະເທດແປງຄ່າເປັນສະກຸນເງິນທີ່ນຳໃຊ້ໃນການດຳເນີນງານໂດຍໃຊ້ອັດຕາແລກປ່ຽນໃນວັນທີທີ່ເກີດລາຍການ. ສ່ວນແຕກຕ່າງຂອງອັດຕາແລກປ່ຽນທີ່ມີຕົວຕົນ ແລະ ບໍ່ມີຕົວຕົນແມ່ນໄດ້ຖືກນຳມາສະເໜີໃນໃບລາຍງານຜົນການດຳເນີນງານ.

ຊັບສິນ ແລະ ໜີ້ສິນ ທີ່ບໍ່ເປັນຕົວເງິນເຊິ່ງເກີດຈາກລາຍການບັນຊີທີ່ເປັນເງິນຕາຕ່າງປະເທດຊຶ່ງບັນທຶກຕາມເກນລາຄາທຶນເດີມແປງຄ່າເປັນສະກຸນເງິນທີ່ນຳໃຊ້ໃນການດຳເນີນງານໂດຍໃຊ້ອັດຕາແລກປ່ຽນໃນວັນທີທີ່ເກີດລາຍການ.

ອັດຕາແລກປ່ຽນເງິນກີບທີ່ນຳໃຊ້ປຽບທຽບກັບເງິນຕາຕ່າງປະເທດ ມີດັ່ງນີ້:

| | 31 ທັນວາ 2019 |
|---|---|
| ໂດລາສະຫາລັດ (“USD”) | 8.842 |
| ໄທບາດ (“THB”) | 299,98 |
| ຢູໂຣ (“EUR”) | 9.836 |

### (ຄ) ປີການບັນຊີ

ໄລຍະເວລາການລາຍງານຂອງສາຂາເລີ່ມຕັ້ງແຕ່ວັນທີ 8 ມີນາ ແລະ ສິ້ນສຸດວັນທີ 31 ທັນວາ.

## 3. ການປ່ຽນແປງນະໂຍບາຍການບັນຊີ

### (ກ) ສັນຍາເຊົ່າ

ຕາມມາດຕະຖານການລາຍງານການເງິນສາກົນ IFRS 16 ແລະ ຖືກຮັບຮອງເອົາໂດຍທະນາຄານແຫ່ງສປປລາວ ຜູ້ເຊົ່າຈະຕ້ອງຮັບຜິດຊອບການເຊົ່າທັງໝົດພາຍໃຕ້ສັນຍາການເງິນ ແລະ ເມື່ອເລີ່ມຕົ້ນການເຊົ່າ ສິດໃນການນຳໃຊ້ຊັບສິນ ແລະ ໜີ້ສິນທີ່ກ່ຽວຂ້ອງຈະຖືກບັນທຶກ. ສາຂາໄດ້ນຳໃຊ້ມາດຕະຖານການລາຍງານການເງິນສາກົນ IFRS 16 ຕັ້ງແຕ່ວັນທີ 8 ມີນາ 2019.

**(ຂ) ນິຍາມຂອງສັນຍາເຊົ່າ**

ສັນຍາເຊົ່າທີ່ຢູ່ພາຍໃຕ້ຂອບເຂດຂອງ IFRS 16 ຄືສັນຍາເຊົ່າຕຶກອາຄານ ແລະ ເຊົ່າຍານພາຫະນະ. ສາຂາໄດ້ປະເມີນວ່າສັນຍາເຊົ່າຢູ່ພາຍໃຕ້ຂອບເຂດກຳນົດຂອງສັນຍາເຊົ່າ ຕາມທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍ 10

**(ຄ) ຜູ້ເຊົ່າ**

ໃນຖານະຜູ້ເຊົ່າ ສາຂາມີການເຊົ່າຫ້ອງການສາຂາ ແລະ ການເຊົ່າຍານພາຫະນະ. ພາຍໃຕ້ IFRS 16, ສາຂາຮັບຮູ້ສິດນຳໃຊ້ຊັບສິນຕາມສັນຍາເຊົ່າ ແລະ ໜີ້ສິນຕາມສັນຍາເຊົ່າຄື: ວ່າສັນຍາເຊົ່ານີ້ຈະຖືກບັນທຶກໃນໃບລາຍງານຖານະການເງິນ. ສັນຍາເຊົ່າທັງໝົດໄດ້ເຊົ່າມາໃນສາຂາໃນປີປັດຈຸບັນ.

ສິດໃນການໃຊ້ຊັບສິນຕາມສັນຍາເຊົ່າ ແມ່ນວັດແທກມູນຄ່າຕາມບັນຊີເຊິ່ງເທົ່າກັບ ໜີ້ສິນຕາມສັນຍາເຊົ່າໃນຕົ້ນປີປະຈຸບັນ, ສ່ວນຫຼຸດຂອງຜູ້ເຊົ່າທີ່ນຳໃຊ້ແມ່ນອັດຕາການກູ້ຢືມເພີ່ມ, ດັດແກ້ສຳລັບລາຍການຄ້າງຄ້າງ ແລະ ລາຍຈ່າຍລ່ວງໜ້າ

## 4. ນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍທາງດ້ານບັນຊີທີ່ສຳຄັນໄດ້ລະບຸໄວ້ດັ່ງລຸ່ມນີ້ ແມ່ນສາຂາໄດ້ນຳໃຊ້ເຂົ້າໃນການກະກຽມເອກະສານລາຍງານການເງິນໃນແຕ່ລະປີຢ່າງຕໍ່ເນື່ອງ.

**(ກ) ເຄື່ອງມືທາງການເງິນ**

ເຄື່ອງມືທາງການເງິນຂອງສາຂາ ປະກອບມີ ເງິນສົດ ແລະ ທຽບເທົ່າເງິນສົດ, ເງິນກູ້ທີ່ເກີດຂຶ້ນ ແລະ ໜີ້ຕ້ອງຮັບ, ເງິນຝາກ, ການລົງທຶນ, ເງິນລະຫວ່າງທະນາຄານ ແລະ ໜີ້ຕ້ອງຮັບອື່ນໆ ແລະ ໜີ້ຕ້ອງສົ່ງ. ນະໂຍບາຍການບັນຊີສຳລັບການຮັບຮູ້ ແລະ ການປະເມີນລາຍການເຫຼົ່ານີ້ ແມ່ນໄດ້ຖືກເປີດເຜີຍໄວ້ໃນບັນດານະໂຍບາຍການບັນຊີຕາມລຳດັບ.

**(ຂ) ເງິນສົດ ແລະ ທຽບເທົ່າເງິນສົດ**

ເງິນສົດ ແລະ ທຽບເທົ່າເງິນສົດປະກອບມີ: ເງິນສົດ ແລະ ເງິນລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງມີອາຍຸຄົບກຳນົດໜ້ອຍກວ່າ ຫຼື ເທົ່າກັບ 30 ວັນ, ທີ່ພ້ອມຈະປ່ຽນເປັນເງິນສົດໄດ້ ແລະ ບັນຊີໜີ້ຕ້ອງຮັບເງິນຝາກທະນາຄານອື່ນທີ່ມີອາຍຸຄົບກຳນົດໜ້ອຍກວ່າ ຫຼື ເທົ່າກັບ 30 ວັນ.

**(ຄ) ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ**

ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ແມ່ນມາຈາກການສະໜອງທຶນຂອງສາຂາໃຫ້ແກ່ລູກຄ້າເພື່ອ ຈຸດປະສົງໃດໜຶ່ງທີ່ນອກເໜືອຈາກການເກນກຳໄລໄລຍະສັ້ນ. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າແມ່ນມາຈາກຍອດຄົງເຫຼືອຫັກລົບເງິນແຮຄ່າເສື່ອມສຳລັບໜີ້ເສຍ ແລະ ໜີ້ສົງໄສຈະສູນເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ, ສະທ້ອນໃຫ້ເຫັນຍອດທີ່ສາມາດຮຽກເກັບຄືນໄດ້ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ທີ່ໄດ້ສະແດງໃຫ້ເຫັນມູນຄ່າບໍ່ລວມດອກເບ້ຍຄ້າງຮັບ.

## (ງ) ເງິນແຮສຳລັບໜີ້ເສຍ ແລະ ໜີ້ຕ້ອງສົງໃສ ແລະ ເງິນລ່ວງໜ້າ

ລະບຽບການເລກທີ 512/ທຫລ ມີຜົນບັງຄັບໃຊ້ ຕັ້ງແຕ່ວັນທີ 1 ຕຸລາ 2018.

ອີງຕາມກົດລະບຽບການຂອງທະນາຄານ ແຫ່ງ ສປປລາວ ເລກທີ 512/ທຫລ ("ທຫລ 512") ວັນທີ 29 ມິຖຸນາ 2018, ມີຜົນສັກສິດຕັ້ງແຕ່ວັນທີ 1 ຕຸລາ 2018, ທະນາຄານຈະຕ້ອງຈັດຊັ້ນເງິນໃຫ້ກູ້ ແລະ ເງິນແຮສຳລັບໜີ້ສູນ. ດັ່ງນັ້ນ, ເງິນໃຫ້ກູ້ຈະແບ່ງອອກເປັນເງິນໃຫ້ກູ້ທີ່ເກີດດອກອອກຜົນ ຫຼື ເງິນກູ້ຄວນເອົາໃຈໃສ່ ຫຼື ເງິນກູ້ທີ່ບໍ່ເກີດດອກອອກຜົນ. ຂຶ້ນຢູ່ກັບສະຖານະທີ່ຄ້າງຊຳລະເງິນ ແລະ ປັດໃຈອື່ນໆ ຊັ້ນເງິນໃຫ້ກູ້ ໜີ້ປົກກະຕິ (ກຸ່ມ A), ຫຼື ໜີ້ຄວນເອົາໃຈໃສ່ (ກຸ່ມ B) ຈະຖືວ່າເປັນເງິນໃຫ້ກູ້ທີ່ຄວນເອົາໃຈໃສ່ ແລະ ຊັ້ນເງິນໃຫ້ກູ້ໜີ້ຕ່ຳກວ່າມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໄສຈະສູນ (ກຸ່ມ D), ຫຼື ໜີ້ສູນ (ກຸ່ມ E) ແມ່ນຈະຖືວ່າເປັນເງິນໃຫ້ກູ້ ທີ່ບໍ່ເກີດດອກອອກຜົນ.

ອີງຕາມລະບຽບການ 512/ທຫລ, ທະນາຄານຕ້ອງທົບທວນ ແລະ ຫັກເງິນແຮລວມໃນແຕ່ລະເດືອນໃຫ້ຖືກຕ້ອງ ແລະ ຄົບຖ້ວນໃນອັດຕາສ່ວນ 0,5% ຂອງຍອດເຫຼືອເງິນໃຫ້ກູ້ທີ່ເປັນຊັ້ນປົກກະຕິ ໃນມື້ທີ່ລາຍງານ. ເຊັ່ນດຽວກັນນັ້ນ, ເງິນແຮສະເພາະ ສຳລັບເງິນໃຫ້ກູ້ຊັ້ນຄວນເອົາໃຈໃສ່, ຊັ້ນຕ່ຳກວ່າມາດຕະຖານ, ຊັ້ນສົງໄສ ແລະ ຊັ້ນສູນ ແມ່ນໃຫ້ເອົາຍອດເຫຼືອໜີ້ ທີ່ເປັນເງິນໃຫ້ກູ້ຢືມຂອງເງິນໃຫ້ກູ້ຢືມແຕ່ລະຊັ້ນລົບໃຫ້ມູນຄ່າຂອງຫຼັກຊັບຄ້ຳປະກັນ (ຖ້າມີ) ໂດຍອີງຕາມລະບຽບຂອງ ທຫລ ທີ່ກຳນົດອັດຕາສ່ວນຂອງເງິນແຮຕາມອັດຕາທີ່ກຳນົດໄວ້ດັ່ງລຸ່ມນີ້:

| **ການຈັດຊັ້ນໜີ້** | **ຈຳນວນມື້ເກີນກຳນົດຈ່າຍ** | **ອັດຕາການຫັກເງິນແຮ** |
|---|---|---|
| ໜີ້ປົກກະຕິ (A) | 0 – 29 ວັນ | 0,5% |
| ໜີ້ຄວນເອົາໃຈໃສ່ (B) | 30 – 89 ວັນ | 3% |
| ໜີ້ຕ່ຳກວ່າມາດຕະຖານ (C) | 90 – 179 ວັນ | 20% |
| ໜີ້ສົງໄສ (D) | 180 – 359 ວັນ | 50% |
| ໜີ້ສູນ (E) | ຫຼາຍກວ່າ 360 ວັນ | 100% |

ອັດຕາສ່ວນສິດທິປະໂຫຍດສູງສຸດຂອງຫຼັກຊັບຄ້ຳປະກັນທີ່ໄດ້ຮັບອະນຸຍາດ ພາຍໃຕ້ ທຫລ 512, ມີດັ່ງນີ້:

| **ປະເພດຂອງຫຼັກຊັບຄ້ຳປະກັນ** | **ອັດຕາສ່ວນສູງສຸດທີ່ອະນຸຍາດ** |
|---|---|
| (ກ) ເງິນຝາກກັບທະນາຄານ<br>- ເປັນສະກຸນເງິນດຽວກັບເງິນກູ້<br>- ບໍ່ເປັນສະກຸນເງິນດຽວກັບເງິນກູ້ | <br>100%<br>95% |
| (ຂ) ຄຳທີ່ຮັກສາຢູ່ໃນທະນາຄານ | 90% |
| (ຄ) ພັນທະບັດລັດຖະບານ ແລະ ພັນທະບັດ ທຫລ<br>- ໃນສະກຸນດຽວກັບເງິນກູ້<br>▪ ຖ້າມີອາຍຸຄົງເຫຼືອ ຕ່ຳກວ່າ 1 ປີ<br>▪ ຖ້າມີອາຍຸຄົງເຫຼືອ ແຕ່ 1 ປີ ຫາ 5 ປີ | |

| | |
|---|---|
| ▪ ຖ້າມີອາຍຸຄົງເຫຼືອ ແຕ່ 5 ປີ ຂຶ້ນໄປ<br>- ໃນສະກຸນເງິນທີ່ແຕກຕ່າງກັບເງິນກູ້<br>▪ ຖ້າມີອາຍຸຄົງເຫຼືອ ຕ່ຳກວ່າ 1 ປີ<br>▪ ຖ້າມີອາຍຸຄົງເຫຼືອ ແຕ່ 1 ປີ ຫາ 5 ປີ<br>▪ ຖ້າມີອາຍຸຄົງເຫຼືອ ແຕ່ 5 ປີ ຂຶ້ນໄປ | 100%<br>90%<br>80%<br>95%<br>85%<br>75% |
| (ງ) ເງິນຝາກກັບທະນາຄານອື່ນ ຫຼື ສະຖາບັນການເງິນອື່ນ<br>▪ ຖ້າມີອາຍຸຄົງເຫຼືອ ຕ່ຳກວ່າ 1 ປີ<br>▪ ຖ້າມີອາຍຸຄົງເຫຼືອ ແຕ່ 1 ປີ ຫາ 5 ປີ<br>▪ ຖ້າມີອາຍຸຄົງເຫຼືອ ແຕ່ 5 ປີ ຂຶ້ນໄປ | <br>80%<br>75%<br>70% |
| (ຈ) ໜັງສືສິນເຊື່ອ (LC) ຫຼື ໜັງສືສິນເຊື່ອແບບສຳຮອງ (SBLC) | 95% |
| (ສ) ໜັງສືຄ້ຳປະກັນ (LG) ຫຼື Bank Guarantee (BG) | 90% |
| (ຊ) ອະສັງຫາລິມະຊັບ | 40% |

ໃນການປ່ຽນແປງຂອງເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ ແມ່ນຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ "ລາຍຈ່າຍເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ". ຄັງເງິນແຮສະສົມສະເພາະສຳລັບ ເງິນກູ້ທີ່ບໍ່ເກີດດອກອອກຜົນ ແມ່ນຖືກບັນທຶກຢູ່ໃນໃບລາຍງານຖານະການເງິນ "ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ,ສຸດທິເງິນແຮສະເພາະ ສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ".

ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີທີ່ກ່ຽວຂ້ອງທີ່ອອກໂດຍ ທະນາຄານ ແຫ່ງ ສປປ ລາວ, ຖ້າຫາກມີການປ່ຽນແປງການຫັກເງິນແຮສຳລັບກິດຈະກຳສິນເຊື່ອ ແມ່ນຕ້ອງບັນທຶກໃນໃບລາຍງານຜົນການດຳເນີນງານ "ລາຍຈ່າຍຈາກການດຳເນີນການອື່ນໆ" ສຳລັບລາຍຈ່າຍເງິນແຮທົ່ວໄປ ແລະ "ລາຍຮັບຈາກການດຳເນີນການອື່ນໆ" ເພື່ອເກັບຄືນລາຍຈ່າຍເງິນແຮທົ່ວໄປ ແລະ ຍອດເຫຼືອຂອງເງິນແຮສຳຮອງທົ່ວໄປທີ່ຈະບັນທຶກໃນໃບສະຫຼຸບຊັບສິນບັດໃນ "ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ" ພາຍໃຕ້ທຶນ ແລະ ຄັງສຳຮອງຂອງທະນາຄານ.

## (ຈ) ການລ້າງໜີ້ສູນ

ເພື່ອໃຫ້ສອດຄ່ອງກັບ ທຫລ 512, ເງິນກູ້ຖືກລ້າງອອກ ຢ່າງຊ້າບໍ່ເກີນ 90 ວັນ ນັບຈາກມື້ຈັດຊັ້ນໜີ້ເປັນໜີ້ສູນ.

ເງິນໃຫ້ກູ້ທີ່ຖືກລ້າງອອກ ແມ່ນໃຫ້ບັນທຶກຢູ່ນອກໃບສະຫຼຸບຊັບສິນບັດເພື່ອຕິດຕາມ ແລະ ລວບລວມ. ຈຳນວນເງິນທີ່ເກັບໄດ້ຈາກເງິນໃຫ້ກູ້ທີ່ລ້າງອອກກ່ອນໜ້ານີ້ ແລະ ລວມທັງລາຍໄດ້ຈາກການຂາຍຫຼັກຊັບຄ້ຳປະກັນຂອງເງິນໃຫ້ກູ້ເຫຼົ່ານັ້ນຈະຕ້ອງຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານເມື່ອມີການຮັບເກີດຂຶ້ນ.

## (ສ) ການຫັກເງິນແຮ ສຳລັບພາລະຜູກພັນ ນອກໃບສະຫຼຸບຊັບສິນບັດ

ອີງຕາມລະບຽບການ ທຫລ 512, ສາຂາບໍ່ຈຳເປັນຕ້ອງຫັກເງິນແຮສຳລັບພາລະຜູກພັນນອກໃບສະຫຼຸບຊັບສິນບັດຂອງທະນາຄານ, ເວັ້ນເສຍແຕ່ສາຂາວ່າໄດ້ຫັກເງິນແຮພາລະຜູກພັນໄວ້ຢູ່ພາຍໃຕ້ສັນຍາຮັບປະກັນແທນລູກຄ້າຂອງຕົນ, ໃນກໍລະນີທີ່ການຈ່າຍຊຳລະເງິນນັ້ນຖືກຈັດປະເພດໜີ້ ແລະ ເງິນແຮສຳລັບໜີ້ສູນ ແມ່ນຈະຕ້ອງໄດ້ປະຕິບັດຕາມນະໂຍບາຍການບັນຊີຕາມທີ່ໄດ້ລະບຸໄວ້ໃນ ບົດອະທິບາຍ 4(ງ).

## (ຊ) ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ

ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ ແມ່ນຖືກບັນທຶກຕາມມູນຄ່າຕົວຈິງ.

## (ຍ) ຄັງສຳຮອງຕາມລະບຽບການ

ອີງຕາມກົດໝາຍວ່າດ້ວຍ ທະນາຄານທຸລະກິດ ລົງວັນທີ 16 ມັງກອນ 2007, ບັນດາທະນາຄານທຸລະກິດ ແມ່ນ ຮຽກຮ້ອງໃຫ້ມີຄັງສຳຮອງກຳໄລສຸດທິ ດັ່ງນີ້:

- ກອງທຶນຄັງສຳຮອງຕາມລະບຽບການ
- ກອງທຶນເພື່ອຂະຫຍາຍທຸລະກິດ ແລະ ອື່ນໆ

ອີງຕາມກົດໝາຍວິສາຫະກິດ (ສະບັບປັບປຸງ) ເລກທີ 46/ນຍ, ລົງວັນທີ 26 ທັນວາ 2013, ສາຂາຕ້ອງໄດ້ ຮັກສາຄັງແຮສຳຮອງຕາມລະບຽບການໃນອັດຕາ 10% ຂອງກຳໄລພາຍຫຼັງທີ່ໄດ້ຫັກເງິນຂາດທຶນສະສົມ. ສາຂາ ສາມາດຢຸດການຫັກເງິນແຮສຳຮອງ ເມື່ອຄັງສຳຮອງຕາມລະບຽບການສະສົມເຖິງ 50 ເປີເຊັນຂອງທຶນຈົດ ທະບຽນ.

## (ດ) ຊັບສົມບັດຄົງທີ່ມີຕົວຕົນ

(i) ລາຍການຊັບສົມບັດຄົງທີ່ມີຕົວຕົນ ແມ່ນບັນທຶກຕາມມູນຄ່າຕົ້ນທຶນລົບໃຫ້ຄ່າຫຼຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມມູນຄ່າສະສົມ (ຖ້າມີ). ຖ້າຫາກລາຍການຂອງຊັບສົມບັດຄົງທີ່ມີຕົວຕົນມີຫຼາຍຊິ້ນສ່ວນທີ່ມີ ອາຍຸການໃຊ້ງານຕ່າງກັນ ແມ່ນໃຫ້ແຍກແຕ່ລະລາຍການຂອງຊັບສົມບັດຄົງທີ່ມີຕົວຕົນ.

(ii) ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນສະບັບປັບປຸງ ເລກທີ 70/ນຍ ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ແຕ່ວັນທີ 24 ພຶດສະພາ 2016 ເຊິ່ງກຳນົດໂດຍປະທານສະພາແຫ່ງຊາດ, ຄ່າຫຼຸ້ຍ ຫ້ຽນຂອງຊັບສົມບັດຄົງທີ່ແມ່ນບັນທຶກໃນໃບລາຍງານຜົນການດຳເນີນງານໂດຍນຳໃຊ້ການຄິດໄລ່ ແບບສະເໝີຕົວຕາມອາຍຸການໃຊ້ງານຂອງຊັບສົມບັດນັ້ນໆ ໃນອັດຕາເປີເຊັນຕໍ່ປີດັ່ງລຸ່ມນີ້:

| | |
|---|---|
| ສ່ວນປັບປຸງສິດທີ່ໃຫ້ເຊົ່າ | 5% |
| ອຸປະກອນໄຟຟ້າ | 20% |
| ເຄື່ອງເຟີນີເຈີ, ເຄື່ອງຕິດຕັ້ງ ແລະ ເຄື່ອງໃຊ້ຫ້ອງການ | 20% |
| ຍານພາຫະນະ | 20% |

(iii) ລາຍຈ່າຍພາຍຫຼັງທີ່ກ່ຽວຂ້ອງກັບລາຍການຊັບສົມບັດຄົງທີ່ຮັບຮູ້ແລ້ວ ຈະຖືກຮັບຮູ້ເປັນຊັບສິນໄດ້ກໍ່ ເມື່ອ ເຫັນວ່າສາມາດເກີດປະໂຫຍດທາງເສດຖະກິດໃນອະນາຄົດ, ສາມາດເພີ່ມປະສິດທິພາບຂອງຊັບ ສິນເດີມຂອງສາຂາ. ສ່ວນຄ່າໃຊ້ຈ່າຍອື່ນໆ ທີ່ຕາມມາແມ່ນໃຫ້ບັນທຶກເປັນລາຍຈ່າຍໃນໄລຍະທີ່ເກີດ ຂຶ້ນ.

(iv) ກຳໄລ ຫຼື ຂາດທຶນທີ່ເກີດຈາກການໝົດອາຍຸ ຫຼື ສະສາງ ບັນດາຊັບສິນບັດຄົງທີ່ອອກ ແມ່ນບັນທຶກສ່ວນແຕກຕ່າງລະຫວ່າງລາຄາຄາດຄະເນສຸດທິ ທີ່ສະສາງອອກກັບມູນຄ່າຍັງເຫຼືອຂອງຊັບສິນນັ້ນ ແລະ ສ່ວນແຕກຕ່າງ ດັ່ງກ່າວແມ່ນໄດ້ບັນທຶກລົງໃນໃບລາຍງານຜົນການດຳເນີນງານຕາມວັນທີທີ່ຊັບສິນບັດດັ່ງກ່າວໝົດອາຍຸ ຫຼື ຖືກສະສາງອອກ.

(v) ຄ່າຫຼຸ້ຍຫ້ຽນຂອງຊັບສິນບັດຄົງທີ່ທີ່ຫັກຄືນຕາມກຳນົດແລ້ວແມ່ນໄດ້ນຳສະເໜີຢູ່ໃນໃບລາຍງານຖານະການເງິນຈົນກວ່າມີການຊຳລະສະສາງ ແລະ ລ້າງອອກຈາກບັນຊີ.

## (ຕ) ການຮັບຮູ້ລາຍຮັບ

ລາຍຮັບດອກເບ້ຍແມ່ນຮັບຮູ້ຕາມຫຼັກການຄ້າງຮັບຄ້າງຈ່າຍປະຈຳວັນ, ຍົກເວັ້ນກໍລະນີທີ່ບັນຊີດັ່ງກ່າວໄດ້ກາຍເປັນບັນຊີທີ່ບໍ່ເກີດດອກອອກຜົນ. ເມື່ອບັນຊີດັ່ງກ່າວກາຍມາເປັນບັນຊີທີ່ບໍ່ເກີດດອກອອກຜົນ, ການບັນທຶກລາຍຮັບດອກເບ້ຍມາເປັນລາຍຮັບພັກໄວ້ຈົນກວ່າຈະເກີດມີການຮັບຮູ້ເງິນສົດ. ບັນຊີຂອງລູກຄ້າທີ່ຖືກພິຈາລະນາເປັນບັນຊີທີ່ບໍ່ເກີດດອກອອກຜົນເມື່ອບໍ່ມີການຊຳລະເງິນຕົ້ນເກີນກຳນົດ 90 ວັນ, ອີງຕາມກົດລະບຽບຂອງ ທຫລ.

ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການທາງການເງິນ ແມ່ນລວມມີຄ່າທຳນຽມທີ່ໄດ້ຮັບຈາກການເຄື່ອນໄຫວເງິນໂອນຕ່າງໆ, ການຊຳລະສະສາງທາງການຄ້າ, ການແລກປ່ຽນເງິນຕາຕ່າງປະເທດ, ລາຍການເຄື່ອນໄຫວຕູ້ກົດເງິນສົດ ແລະ ໜັງສືຮັບຮອງທາງການເງິນ. ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການທາງການເງິນ ແມ່ນໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບຕາມຫຼັກການເງິນສົດ.

ລາຍຮັບຈາກການໃຫ້ບໍລິການຕ່າງໆຂອງສາຂາແມ່ນໄດ້ຕັ້ງຄ້າງຮັບຕາມມາດຕະຖານດັ່ງລຸ່ມນີ້:

(i) ຄ່າທຳນຽມ ແລະ ຄ່າບໍລິການ ໃນການຈັດສິນເຊື່ອພ້ອມທັງສິ່ງອຳນວຍຄວາມສະດວກອື່ນໆ ທີ່ໃຫ້ບໍລິການແກ່ລູກຄ້າແມ່ນຮັບຮູ້ເມື່ອມີການເຄື່ອນໄຫວດັ່ງກ່າວ;
(ii) ຄ່າທຳນຽມຂໍ້ຜູກມັດ ແລະ ຄ່າຮັບປະກັນ ພ້ອມກັບສິ່ງອຳນວຍຄວາມສະດວກອື່ນໆ ທີ່ໃຫ້ບໍລິການແກ່ລູກຄ້າແມ່ນ ຮັບຮູ້ເມື່ອມີການເຄື່ອນໄຫວດັ່ງກ່າວ; ແລະ
(iii) ຄ່າບໍລິການ ແລະ ຄ່າຈັດການ ແມ່ນໄດ້ຮັບຮູ້ ເມື່ອການເຄື່ອນໄຫວດັ່ງກ່າວເກີດຂຶ້ນ.

## (ຖ) ລາຍຈ່າຍດອກເບ້ຍ

ລາຍຈ່າຍດອກເບ້ຍຂອງເງິນຝາກແມ່ນໄດ້ຮັບຮູ້ຕາມຫຼັກການຄ້າງຮັບຄ້າງຈ່າຍປະຈຳວັນ.

## (ທ) ອາກອນກຳໄລ

ລາຍຈ່າຍອາກອນປະກອບດ້ວຍ ອາກອນໃນປີ ແລະ ອາກອນເຍື່ອນຊຳລະ. ອາກອນໃນປີ ແລະ ອາກອນເຍື່ອນຊຳລະ ແມ່ນຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ.

**ອາກອນພາຍໃນປີ**

ອາກອນພາຍໃນປີ ແມ່ນຄິດໄລ່ຕາມກົດໝາຍອາກອນ ຫຼື ຕາມບັນຍັດ ໃນວັນທີທີ່ປະກົດໃນໃບລາຍງານຖານະການເງິນ. ຜູ້ບໍລິຫານໄດ້ຕີລາຄາສະຖານະການທີ່ກົດໝາຍອາກອນໃນປັດຈຸບັນ ອາດມີການຕີຄວາມໝາຍທີ່ແຕກ ຕ່າງກັນເປັນແຕ່ລະໄລຍະ, ທັງໄດ້ມີການກະກຽມເງິນແຮໄວ້ ໃນກໍລະນີທີ່ເກີດມີຈຳນວນເງິນທີ່ຕ້ອງຈ່າຍເພີ່ມເຕີມ ໃຫ້ແກ່ກົມສ່ວຍສາອາກອນ.

ເງິນແຮ ສຳລັບອາກອນ ໃນປັດຈຸບັນ ແມ່ນຄິດໄລ່ຈາກລາຍຮັບທັງໝົດ ໂດຍອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ສຳລັບແຕ່ລະປີທີ່ມີຜົນກຳໄລ, ທະນາຄານຈະຕ້ອງຈ່າຍອາກອນກຳໄລໃນອັດຕາ 24% ຂອງກຳໄລທາງອາກອນທັງໝົດ.

**ອາກອນເຍື້ອນຊຳລະ**

ອາກອນເຍື້ອນຊຳລະ ຖືກຮັບຮູ້ໂດຍສ່ວນຕ່າງຊົ່ວຄາວລະຫວ່າງ ຍອດຍົກມາຂອງຊັບສິນ ແລະ ໜີ້ສິນ ສຳລັບຈຸດປະສົງ ໃນການລາຍງານທາງການເງິນ ແລະ ຈຳນວນເງິນທີ່ຖືກໃຊ້ ສຳລັບການໄລ່ອາກອນ.

ການວັດແທກມູນຄ່າອາກອນເຍື້ອນຊຳລະ ສະທ້ອນໃຫ້ເຫັນຜົນກະທົບທາງດ້ານອາກອນ ທີ່ຈະເປັນໄປຕາມຮູບແບບທີ່ທາງສາຂາ ຄາດວ່າຈະໄດ້ຮັບຄືນ, ໃນມື້ລາຍງານທ້າຍປີ ເພື່ອຮັບປະກັນ ຫຼື ຊຳລະໜີ້ສິນ ທີ່ຍັງເຫຼືອຂອງຊັບສິນ ແລະ ໜີ້ສິນ.

ອັດຕາອາກອນເຍື້ອນຊຳລະ ແມ່ນຖືກຄິດໄລ່ຕາມອັດຕາ ທີ່ຍອມຮັບໃນສ່ວນທີ່ຜິດດ່ຽງຊົ່ວຄາວ ໃນເວລາທີ່ປົ້ນກັບບັນຊີ ໂດຍອັດຕາທີ່ໃຊ້ຄິດໄລ່ອາກອນ ອີງຕາມກົດໝາຍທີ່ລະບຸໄວ້ແທ້ຈິງ ໃນມື້ທີ່ລາຍງານການເສຍອາກອນ.

ຊັບສິນ ແລະ ໜີ້ສິນ ອາກອນເຍື້ອນຊຳລະ ຖືກລົບລ້າງກັນກໍ່ຕໍ່ເມື່ອມີສິດຜົນບັງຄັບໃຊ້ທາງກົດໝາຍ ເພື່ອລົບລ້າງໜີ້ສິນ ແລະ ຊັບສິນພາຍໃນປີ ເຊິ່ງກ່ຽວພັນການເກັບພາສີຂອງເຈົ້າໜ້າທີ່ສ່ວຍສາອາກອນ ໃນສ່ວນທີ່ມີຈິງ ຫຼື ສ່ວນທີ່ແຕກຕ່າງ ຂອງການເສຍອາກອນເຊັ່ນດຽວກັນ. ແຕ່ວ່າພວກເຂົາໄດ້ຕັ້ງໃຈຊຳລະໜີ້ສິນ ແລະ ຊັບສິນພາຍໃນປີ ຕາມພື້ນຖານລາຍໄດ້ທີ່ຫັກພາສີ ຫຼື ຊັບສິນ ແລະ ໜີ້ສິນ ຂອງພວກເຂົາຈະຖືກຮັບຮູ້ພ້ອມໆກັນ.

ຊັບສິນອາກອນເຍື້ອນຊຳລະໃຊ້ສຳລັບບັນດາອາກອນທີ່ບໍ່ໄດ້ຈ່າຍຍ້ອນຂາດທຶນ, ຍອດຍົກໄປຂອງອາກອນທີ່ຈ່າຍເກີນ ແລະ ລາຍຈ່າຍທີ່ຖືກຍົກເວັ້ນອາກອນ, ໝາຍຄວາມວ່າອາກອນກຳໄລຈະຖືກຄິດໄລ່ ໂດຍຫັກບັນດາອາກອນທີ່ບໍ່ໄດ້ຈ່າຍຍ້ອນຂາດທຶນ. ຍອດຍົກໄປຂອງອາກອນ ແລະ ລ່າຍຈ່າຍທີ່ຖືກຍົກເວັ້ນອາກອນໃນອະນາຄົດທີ່ສາມາດຍອມຮັບໄດ້. ຊັບສິນອາກອນເຍື້ອນຊຳລະ ພິຈາລະນາໃນແຕ່ລະມື້ທີ່ມີການລາຍງານ ແລະ ຖືກລົບລ້າງອອກ ໃນອາກອນກຳໄລທີ່ກ່ຽວຂ້ອງກັບຜົນປະໂຫຍດຂອງອາກອນລາຍໄດ້ ຢ່າງແທ້ຈິງ.

**(ນ) ເງິນແຮ**

ເງິນແຮ ຈະຖືກຮັບຮູ້, ຖ້າເປັນຜົນຂອງການດຳເນີນງານທີ່ຜ່ານມາ, ສາຂາມີພັນທະຕາມກົດໝາຍ ຫຼື ໜີ້ສິນ ທີ່ອາດຈະເກີດຂຶ້ນ ໃນປະຈຸບັນ ຊຶ່ງສາມາດປະເມີນໄດ້ຢ່າງໜ້າເຊື່ອຖື ແລະ ມີຄວາມເປັນໄປໄດ້ຂ້ອນຂ້າງແນ່ນອນທີ່ສາຂາຈະຕ້ອງໄດ້ຈ່າຍຜົນຕອບແທນທີ່ເປັນເງິນເພື່ອຊຳລະໜີ້ສິນ ດັ່ງກ່າວ. ເງິນແຮພິຈາລະນາຈາກສ່ວນຫຼຸດ

ກະແສເງິນສົດໃນອະນາຄົດໂດຍໃຊ້ອັດຕາຄິດໄລ່ກ່ອນຫັກອາກອນ ຊຶ່ງສະທ້ອນການປະເມີນຄວາມສ່ຽງ ຂອງຕະຫຼາດໃນປະຈຸບັນຂອງມູນຄ່າຕາມເວລາຂອງເງິນ ແລະ ຄວາມສ່ຽງສະເພາະທີ່ກ່ຽວຂ້ອງກັບໜີ້ສິນ.

## (ບ) ພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນທີ່ກ່ຽວຂ້ອງ ແມ່ນພາກສ່ວນທີ່ມີຄວາມອາດສາມາດໂດຍທາງກົງ ຫຼື ທາງອ້ອມຈະຄວບຄຸມພາກສ່ວນອື່ນ ຫຼື ມີອຳນາດທີ່ພົ້ນເດັ່ນ ຕໍ່ກັບພາກສ່ວນອື່ນທີ່ກ່ຽວຂ້ອງກັນກັບການຕັດສິນໃຈກ່ຽວກັບການເງິນ ແລະ ການດຳເນີນງານ ຫຼື ສາຂາ ພ້ອມກັບພາກສ່ວນດັ່ງກ່າວມີການຄວບຄຸມຮ່ວມກັນ ຫຼື ມີອຳນາດທີ່ພົ້ນເດັ່ນ. ພາກສ່ວນທີ່ກ່ຽວຂ້ອງ ອາດເປັນບຸກຄົນ ຫຼື ບໍລິສັດ ແລະ ລວມທັງສະມາຊິກຄອບຄົວຂອງບຸກຄົນໃດໜຶ່ງທີ່ຖືວ່າເປັນພາກສ່ວນທີ່ກ່ຽວຂ້ອງ.

## (ປ) ສິດທິຜົນປະໂຫຍດຂອງພະນັກງານ

*ຜົນປະໂຫຍດພາຍຫຼັງອອກການ*

ຜົນປະໂຫຍດພາຍຫຼັງອອກການ ແມ່ນຈະຖືກຈ່າຍໃຫ້ກັບພະນັກງານຂອງສາຂາທີ່ກະສຽນໂດຍຫ້ອງການ ກອງທຶນປະກັນສັງຄົມແຫ່ງຊາດ (ຫກປຊ) ເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສາຂາໄດ້ປະກອບສ່ວນ ໃນການໃຫ້ສິດທິຜົນປະໂຫຍດພາຍຫຼັງອອກການ ໂດຍການຈ່າຍເບ້ຍປະກັນສັງຄົມເປັນເດືອນໃນອັດຕາ 6,00% ຂອງເງິນເດືອນ (ເພດານສູງສຸດຂອງ ຫກປຊ ແມ່ນ 4.500.000 ກີບ, ອັດຕາສູງສຸດໃໝ່ມີຜົນຕັ້ງແຕ່ວັນທີ 01 ມັງກອນ 2017). ສາຂາ ບໍ່ມີພັນທະເພີ່ມເຕີມຕໍ່ກັບການໃຫ້ຜົນປະໂຫຍດພະນັກງານພາຍຫຼັງອອກການ ນອກຈາກນີ້.

*ຜົນປະໂຫຍດຈາກການເລີກຈ້າງ*

ອີງຕາມມາດຕາທີ 82 ຂອງກົດໝາຍວ່າດ້ວຍ ແຮງງານ ສະບັບປັບປຸງທີ່ອອກວັນທີ 24 ທັນວາ 2013 ໂດຍປະທານປະເທດຂອງ ສປປລາວ. ສາຂາມີພັນທະທີ່ຕ້ອງຈ່າຍເງິນອຸດໜູນໃຫ້ພະນັກງານທີ່ຖືກຍົກເລີກສັນຍາແຮງງານ ໃນກໍລະນີດັ່ງຕໍ່ໄປນີ້:

- ພະນັກງານທີ່ຂາດຄວາມຊໍານິຊໍານານພິເສດ ຫຼື ສຸຂະພາບບໍ່ແຂງແຮງ ແລະ ຫຼັງຈາກຊ່ວຍຊັບຊ້ອນໃຫ້ປະຕິບັດງານ ໃນການດຳເນີນງານທີ່ເໝາະສົມອື່ນໆ ເພີ່ມເຕີມຕາມຄວາມສາມາດ ແລະ ສຸຂະພາບ ແລະ ບຸກຄົນ ດັ່ງກ່າວຍັງມີບັນຫາ ຄືຍັງບໍ່ສາມາດເຮັດວຽກຕໍ່ໄດ້;
- ນາຍຈ້າງພິຈາລະນາເຫັນວ່າມີຄວາມຈຳເປັນທີ່ຈະຕ້ອງຫຼຸດຈຳນວນພະນັກງານເພື່ອປັບປຸງການເຮັດວຽກໃນຫົວໜ່ວຍແຮງງານຫຼັງຈາກປຶກສາສະພາບການຄ້າ ຫຼື ຕົວແທນພະນັກງານ ຫຼື ພະນັກງານສ່ວນໃຫຍ່ ແລະ ໄດ້ລາຍງານ ໄປຍັງໜ່ວຍງານບໍລິຫານ.

ສຳລັບການຍົກເລີກສັນຍາແຮງງານຕາມເງື່ອນໄຂທີ່ກ່າວມາຂ້າງເທິງ, ນາຍຈ້າງຕ້ອງຈ່າຍເງິນຊົດເຊີຍໃຫ້ຜູ້ອອກແຮງງານທີ່ຢຸດເຊົາວຽກເຊິ່ງຄິດໄລ່ໃນເກນ 10% ຂອງເງິນເດືອນພື້ນຖານກ່ອນການຢຸດເຊົາວຽກຄູນດ້ວຍຈຳນວນຂອງເດືອນທີ່ໄດ້ເຮັດວຽກ.

**(ຜ) ສັນຍາເຊົ່າ**

ສາຂາໄດ້ນຳໃຊ້ IFRS 16 ໂດຍໃຊ້ວິທີການປັບປຸງຍ້ອນຫຼັງ ດັ່ງນັ້ນຂໍ້ມູນປຽບທຽບ ແມ່ນບໍ່ໄດ້ຮັບການປັບປຸງໃໝ່ ແລະ ຍັງຄົງລາຍງານພາຍໃຕ້ ລະບຽບການທີ່ອອກໂດຍ ທະນາຄານ ແຫ່ງ ສປປ ລາວ ແລະ ບັນດາລະບຽບການທີ່ກ່ຽວຂ້ອງ, ລາຍລະອຽດຂອງນະໂຍບາຍການບັນຊີພາຍໃຕ້ ລະບຽບການທີ່ອອກໂດຍ ທະນາຄານ ແຫ່ງ ສປປ ລາວ ແລະ ບັນດາລະບຽບການທີ່ກ່ຽວຂ້ອງ ຈະຖືກເປີດເຜີຍແຍກຕ່າງຫາກ ເຊິ່ງແຕກຕ່າງຈາກ IFRS 16, ຜົນກະທົບຈາກການປ່ຽນແປງນີ້ ໄດ້ເປີດເຜີຍຢູ່ໃນບົດອະທິບາຍທີ່ 3.

**ນະໂຍບາຍທີ່ມີຜົນບັງຄັບໃຊ້ຈາກ ວັນທີ 1 ມັງກອນ 2019.**

ໃນເວລາເລີ່ມຕົ້ນເຮັດສັນຍາ, ສາຂາຈະປະເມີນສັນຍາວ່າຈ້າງ ຫຼື ສັນຍາເຊົ່າ. ສັນຍາແມ່ນ ຫຼື ປະກອບດ້ວຍສັນຍາເຊົ່າ, ຖ້າສັນຍາທີ່ເຮັດໃຫ້ສິດໃນການຄວບຄຸມການນຳໃຊ້ຊັບສິນທີ່ມີຕົວຕົນທີ່ລະບຸໄວ້ເປັນຊ່ວງໄລຍະໃນການແລກປ່ຽນສຳລັບພິຈາລະນາ. ເພື່ອປະເມີນວ່າ ສັນຍາທີ່ເຮັດໃຫ້ສິດໃນການຄວບຄຸມການນຳໃຊ້ຊັບສິນທີ່ມີຕົວຕົນ ສາຂາປະເມີນວ່າ:

- ສັນຍາໄດ້ກວມເອົາການນຳໃຊ້ຊັບສິນທີ່ມີຕົວຕົນ;
- ສາຂາມີສິດໃນການນຳເອົາສິດຜົນປະໂຫຍດທາງເສດຖະກິດທັງໝົດຈາກການນຳໃຊ້ຊັບສິນໃນລະຫວ່າງທີ່ນຳໃຊ້ຢູ່;
- ສາຂາມີສິດທາງກົງໃນການນຳໃຊ້ຊັບສິນ. ທະນາຄານມີສິດເມື່ອຕ້ອງທຳການຕັດສິນໃຈໃນສິດທີ່ກ່ຽວຂ້ອງທີ່ສຸດຈາກການປ່ຽນແປງວິທີການທີ່ຊັບສິນຈະຖືກເອົາໄປນຳໃຊ້.

ນະໂຍບາຍນີ້ນຳໃຊ້ກັບສັນຍາທີ່ໄດ້ເຊັນຢູ່ໃນ, ຫຼື ປ່ຽນແປງ, ຫຼື ຫຼັງຈາກ ວັນທີ 1 ມັງກອນ 2019.

ໃນເວລາເລີ່ມຕົ້ນເຮັດສັນຍາ ຫຼື ໃນເວລາທີ່ມີການປະເມີນຄືນສັນຍາທີ່ລວມອີງປະກອບໃນການເຊົ່າ, ສາຂາຈັດແບ່ງການພິຈາລະນາແຕ່ລະເນື້ອໃນຂອງສັນຍາເຊົ່າບົນພື້ນຖານຄວາມສຳພັນຂອງລາຄາໃນຕົວມັນເອງ.

## 5. ເງິນສົດ

| | 2019 *(ລ້ານກີບ)* |
|---|---|
| ລາວກີບ ("LAK") | 1.977 |
| ໂດລາສະຫາລັດ ("USD") | 2.289 |
| ໄທບາດ ("THB") | 506 |
| ອື່ນໆ | 459 |
| | **5.231** |

## 6. ໜີ້ຕ້ອງຮັບຈາກສຳນັກງານໃຫຍ່ ແລະ ສາຂາອື່ນ ແລະ ທະນາຄານອື່ນໆ

| | 2019<br>*(ລ້ານກີບ)* |
|---|---|
| ລາວກີບ ("LAK") | 225.776 |
| ສະກຸນເງິນອື່ນໆ | 347.083 |
| | **572.859** |

### ກ. ລາຍການພາຍໃນປະເທດ

| | 2019<br>*(ລ້ານກີບ)* |
|---|---|
| ຕາມເວລາຮຽກເກັບ | 176.725 |
| ເງິນຝາກມີກຳນົດ | 80.000 |
| | **256.725** |

### ຂ. ລາຍການຕ່າງປະເທດ

| | 2019<br>*(ລ້ານກີບ)* |
|---|---|
| ໂດລາສະຫະລັດ | 7.795 |
| ໄທບາດ | 11.142 |
| ອື່ນໆ | 5.394 |
| | **24.331** |

### ຄ. ເງິນຝາກມີກຳນົດ

| | 2019<br>*(ລ້ານກີບ)* |
|---|---|
| ໂດລາສະຫະລັດ | 291.803 |
| | **291.803** |

ເງິນຝາກກະແສລາຍວັນ ຢູ່ທະນາຄານພາຍໃນ ແລະ ຕ່າງປະເທດ ແມ່ນເປັນເງິນທີ່ບໍ່ມີດອກເບ້ຍ.

## 7. ເງິນຝາກຕາມລະບຽບການກັບທະນາຄານກາງ.

| | 2019<br>*(ລ້ານກີບ)* |
|---|---|
| ເງິນຝາກຕາມລະບຽບການ: | |
| ເງິນຝາກບັງຄັບ | 48.305 |
| ເງິນຝາກກະແສລາຍວັນ | 17.977 |
| | **66.282** |

ຍອດເຫຼືອກັບ ທຫລ ລວມມີ ເງິນຝາກບັງຄັບ ແລະ ເງິນຝາກກະແສລາຍວັນ. ເງິນຝາກເຫຼົ່ານີ້ ແມ່ນບໍ່ມີດອກເບ້ຍ.

ພາຍໃຕ້ກົດລະບຽບຂອງ ທຫລ, ສາຂາແມ່ນໄດ້ຖືກຮຽກຮ້ອງໃຫ້ມີການຮັກສາເງິນສົດໄວ້ກັບທຫລໃນຮູບແບບຂອງບັນຊີເງິນຝາກແຮບັງຄັບ, ຊຶ່ງຄິດໄລ່ ໃນອັດຕາ 5% ແລະ 10% ໃນທຸກໆສອງຄັ້ງຕໍ່ເດືອນ ຂອງເງິນຝາກທັງໝົດຂອງລູກຄ້າທີ່ມີກຳນົດໄລຍະເວລາໜ້ອຍກວ່າ 12 ເດືອນ, ໃນສະກຸນເງິນກີບ ແລະ ເງິນຕາຕ່າງປະເທດຕາມລຳດັບ. ໃນລະຫວ່າງປີ, ທາງສາຂາໄດ້ຮັກສາເງິນຝາກບັງຄັບຕາມລະບຽບການເພື່ອໃຫ້ສອດຄ່ອງກັບຂໍ້ກຳນົດຂອງ ທຫລ.

## 8. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ໃຫ້ແກ່ລູກຄ້າ, ສຸດທິເງິນແຮສະເພາະ.

| | 2019<br>*(ລ້ານກີບ)* |
|---|---|
| ເງິນໃຫ້ກູ້ຢືມ ແລະ ໜີ້ຕ້ອງຮັບ: | |
| ເງິນເບີກເກີນບັນຊີ | 12.040 |
| ເງິນໃຫ້ກູ້ຢືມ | 378.507 |
| | **390.547** |
| ເງິນແຮສຳລັບໜີ້ເສຍ ແລະ ໜີ້ສົງໄສ ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ເງິນແຮສະເພາະ | (11.247) |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າແກ່ລູກຄ້າ | **379.300** |

## ກ. ຈັດປະເພດຕາມອາຍຸຂອງສິນເຊື່ອທີ່ຍັງເຫຼືອ

| | 2019<br>*(ລ້ານກີບ)* |
|---|---:|
| ພາຍໃນ 1 ປີ | 265.572 |
| ເກີນ 1 ປີ | 109.074 |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | 15.901 |
| | **390.547** |

## ຂ. ຈັດປະເພດຕາມສະກຸນເງິນ

| | 2019<br>*(ລ້ານກີບ)* |
|---|---:|
| ກີບ | 262.046 |
| ໂດລາສະຫະລັດ | 128.501 |
| | **390.547** |

## ຄ. ແຍກຕາມປະເພດທຸລະກິດ

| | 2019<br>*(ລ້ານກີບ)* |
|---|---:|
| ກະສິກຳ - ປ່າໄມ້ | 3.504 |
| ການຄ້າ | 133.369 |
| ອຸດສະຫະກຳ | 24.460 |
| ການບໍລິການ | 225.134 |
| ຂົນສົ່ງ - ໄປສະນີ | 4.080 |
| | **390.547** |

## ງ. ຈັດປະເພດຕາມຜົນການດຳເນີນງານ

| | 2019<br>*(ລ້ານກີບ)* |
|---|---:|
| ເງິນກູ້ເກີດດອກອອກຜົນ | 374.647 |
| ໜີ້ທີ່ຄວນເອົາໃຈໃສ່ | - |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | 15.900 |
| | **390.547** |

## ຈ. ຈັດປະເພດຕາມອັດຕາດອກເບ້ຍ (ຕໍ່ປີ)

| | 2019 |
|---|---|
| | % |
| ເງິນກູ້: | |
| ກີບ | 4,25% - 6,70% |
| ໂດລາ | 3,40% - 5,50% |
| ບາດ | 3,40% - 5,50% |

## ສ. ເງິນແຮສະເພາະ ສຳລັບກິດຈະກຳສິນເຊື່ອ

| | 2019 |
|---|---|
| | *(ລ້ານກີບ)* |
| ຍອດເຫຼືອຕົ້ນປີ | - |
| ເງິນແຮທີ່ເກີດຂຶ້ນໃນປີ | 11.247 |
| **ຍອດເຫຼືອໃນທ້າຍປີ** | **11.247** |

## ຊ. ເງິນແຮທົ່ວໄປ ສຳລັບກິດຈະກຳສິນເຊື່ອ

| | 2019 |
|---|---|
| | *(ລ້ານກີບ)* |
| ຍອດເຫຼືອຕົ້ນປີ | 1.153 |
| ສ່ວນຜິດດ່ຽງຈາກການແລກປ່ຽນເງິນຕາ | 15 |
| ເງິນແຮທີ່ເກີດຂຶ້ນໃນປີ | 701 |
| **ຍອດເຫຼືອໃນທ້າຍປີ** | **1.869** |

## 9. ຊັບສິນບັດຄົງທີ່ມີຕົວຕົນ

| | *ບົດ ອະທິບາຍ* | 2019 *(ລ້ານກີບ)* |
|---|---|---|
| ວຽກກຳລັງກໍ່ສ້າງ | | 366 |
| ຊັບສິນບັດຄົງທີ່ມີຕົວຕົນ | | 74 |
| ຊັບສິນບັດຄົງທີ່ບໍ່ມີຕົວຕົນ | *9.1* | 2.049 |
| ລວມ | | **2.489** |

## 9.1 ຊັບສິນບັດຄົງທີ່ມີຕົວຕົນ

| | ສ່ວນປັບປຸງສິດທີ່ໃຫ້ເຊົ່າ (ລ້ານກີບ) | ອຸປະກອນຫ້ອງການ (ລ້ານກີບ) | ເຟີນິເຈີ ແລະ ເຄື່ອງຕິດຕັ້ງ (ລ້ານກີບ) | ຍານພາຫະນະ (ລ້ານກີບ) | ລວມ (ລ້ານກີບ) |
|---|---|---|---|---|---|
| **ຕົ້ນທຶນ** | | | | | |
| ການໂອນຈາກ ຍອດເຫຼືອຈາກທະນາຄານຕົວແທນ | 3.158 | 7.608 | 3.194 | 2.255 | 16.217 |
| ເພີ່ມຂຶ້ນໃນປີ | - | 53 | - | - | 53 |
| ສະສາງໃນປີ | - | - | - | (1.935) | (1.935) |
| **ຍອດເຫຼືອໃນວັນທີ 31 ທັນວາ 2019** | **3.158** | **7.661** | **3.194** | **320** | **14.335** |
| **ຄ່າຫຼຸ້ຍຫ້ຽນສະສົມ** | | | | | |
| ການໂອນຈາກ ຍອດເຫຼືອຈາກທະນາຄານຕົວແທນ | 2.091 | 6.985 | 2.585 | 2.016 | 13.678 |
| ຄ່າຫຼຸ້ຍຫ້ຽນໃນປີ | 81 | 128 | 97 | 1 | 308 |
| ສະສາງໃນປີ | - | - | - | (1.700) | (1.700) |
| **ຍອດເຫຼືອໃນວັນທີ 31 ທັນວາ 2019** | **2.172** | **7.113** | **2.682** | **317** | **12.286** |
| | | | | | |
| **ມູນຄ່າທາງບັນຊີ** | | | | | |
| ການໂອນຈາກ ຍອດເຫຼືອຈາກທະນາຄານຕົວແທນ | 1.067 | 623 | 609 | 239 | 2.539 |
| **ໃນວັນທີ 31 ທັນວາ 2019** | **986** | **548** | **512** | **3** | **2.049** |

## 10. ສິດໃນການນໍາໃຊ້ຊັບສິນ

### (ກ)ສິດໃນການນໍາໃຊ້ຊັບສິນ

| | 31 ທັນວາ 2019 *(ລ້ານກີບ)* |
|---|---|
| **ຍອດເຫຼືອໃນວັນທີ 31 ມັງກອນ 2019** | - |
| ເພີ່ມຂຶ້ນໃນປີ | 6.833 |
| ຄ່າຫຼຸ້ຍຫ້ຽນໃນປີ | 47 |
| **ຍອດເຫຼືອໃນວັນທີ 31 ມັງກອນ 2019** | **6.786** |

### (ຂ)ຈໍານວນທີ່ຮັບຮູ້ໃນກໍາໄລຂາດທຶນ

| | 31 ທັນວາ 2019 *(ລ້ານກີບ)* |
|---|---|
| ດອກເບ້ຍໜີ້ສິນຕາມສັນຍາເຊົ່າ | - |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ | 47 |
| **ລວມ** | **47** |

## 11. ຊັບສິນອາກອນເຍື້ອນຊໍາລະ

ສາຂາໄດ້ບັນທຶກຊັບສິນອາກອນເຍື້ອນຊໍາລະທີ່ລໍຖ້າສະສາງສໍາຮອງເງິນກູ້ ແລະ ເງິນລ່ວງໜ້າ, ນອກຈາກນີ້ສາຂາໄດ້ບັນທຶກຊັບສິນອາກອນເຍື້ອນຊໍາລະໃນຂາດທຶນຈາກອາກອນໃນເມື່ອກ່ອນ ສໍາລັບກໍາໄລສຸດທິໃນປີ.

| | ໂອນຈາກທະນາຄານຕົວແທນ *(ລ້ານກີບ)* | ໃນລາຍງານຜົນໄດ້ຮັບ *(ລ້ານກີບ)* | ໃນວັນທີ 31 ທັນວາ 2019 *(ລ້ານກີບ)* |
|---|---|---|---|
| **ຊັບສິນອາກອນເຍື້ອນຊໍາລະ** | | | |
| ເງິນແຮ | 278 | 2.869 | 3.147 |
| ຂາດທຶນຍົກມາ | 8.086 | (8.086) | - |
| | **8.364** | **(5.217)** | **3.147** |

ດັ່ງທີ່ປະກາດຜ່ານແຈ້ງການຈາກກະຊວງການເງິນວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄຸ້ມຄອງອາກອນ, ກົດໝາຍວ່າດ້ວຍອາກອນລາຍໄດ້ ແລະ ກົດໝາຍວ່າດ້ວຍອາກອນຊົມໃຊ້ສະບັບເລກທີ 042 /ກຊງ, ລົງວັນທີ 11 ກຸມພາ 2020, ກົດໝາຍ ວ່າດ້ວຍອາກອນລາຍໄດ້ສະບັບເລກທີ 67/ສພ ເລີ່ມນໍາໃຊ້ໃນວັນທີ 1 ມັງກອນ 2020 ເປັນຕົ້ນໄປ. ສາຂາຕັດສິນໃຈບໍ່ນໍາໃຊ້ ອັດຕາອາກອນທີ່ 20% ໃນການວັດແທກຊັບສິນອາກອນເຍື້ອນຊໍາລະ ແລະ ໜີ້ສິນອື່ນໆ ກໍຄືໃນວັນທີ 31 ທັນວາ 2019 ແມ່ນບໍ່ມີຄວາມແນ່ນອນນັບຕັ້ງແຕ່ມີຜົນບັງຄັບໃຊ້ກົດໝາຍອາກອນໃໝ່ດັ່ງກ່າວ ແລະ ກໍບໍ່ໄດ້ສົ່ງຜົນກະທົບທີ່ເປັນສາລະສໍາຄັນແຕ່ຢ່າງໃດ.

## 12. ຊັບສິນອື່ນໆ

| | 2019 *(ລ້ານກີບ)* |
|---|---|
| ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ | 438 |
| ຈ່າຍລ່ວງໜ້າ | 572 |
| ໜີ້ຕ້ອງຮັບອື່ນໆ | 11.281 |
| | **12.291** |

## 13. ເງິນຝາກຂອງລູກຄ້າ

### ກ. ຈັດຕາມປະເພດຂອງເງິນຝາກ

| | 2019 *(ລ້ານກີບ)* |
|---|---|
| ເງິນຝາກກະແສລາຍວັນ | 390.163 |
| ເງິນຝາກປະຢັດ | 1.966 |
| ເງິນຝາກມີກຳນົດ | 104.492 |
| ເງິນຝາກລໍຖ້າຮຽກເກັບຈາກລູກຄ້າລາຍຍ່ອຍ* | 6.331 |
| | **501.952** |

*ເງິນຝາກເຫຼົ່ານີ້ສະແດງໃຫ້ເຫັນຍອດເງິນທີ່ລໍຖ້າຮຽກເກັບຈາກລູກຄ້າລາຍບຸກຄົນທີ່ມີຜົນມາຈາກການປິດການໃຫ້ບໍລິການແກ່ລູກຄ້າລາຍຍ່ອຍຂອງສາຂາ ເອເອັນແຊັດ ລາວ ຈຳກັດ. ຍອດຄົງເຫລືອເຫຼົ່ານີ້ໄດ້ຮັບການອະນຸມັດໂດຍ ທຫລ ໃຫ້ບັນທຶກ ແລະ ຕິດຕາມໃນບັນຊີລໍຖ້າຮຽກເກັບລູກຄ້າລາຍຍ່ອຍເປັນໄລຍະເວລາ 3 ປີຫລັງຈາກນັ້ນຈະໂອນເງິນທີ່ຍັງເຫລືອດັ່ງກ່າວເຂົ້າຄັງເງິນຂອງລັດຖະບານຖ້າລູກຄ້າບໍ່ຮຽກຮ້ອງຄືນ.

### ຂ. ຈັດຕາມປະເພດສະກຸນເງິນ

| | 2019 *(ລ້ານກີບ)* |
|---|---|
| ກີບ | 205.317 |
| ໂດລາ | 283.936 |
| ບາດ | 9.115 |
| ອື່ນໆ | 3.584 |
| | **501.952** |

ຄ. ອັດຕາດອກເບ້ຍ (ຕໍ່ປີ)

| | 2019<br>% |
|---|---|
| ບັນຊີຝາກປະຢັດ | |
| ລາວກີບ | 1,00% - 1,91% |
| ໂດລາສະຫະລັດ | 1,00% - 2,00% |
| ໄທບາດ | 0,50% - 2,00% |
| | |
| ບັນຊີຝາກມີກຳນົດ | |
| ລາວກີບ | 2,00% - 4,00% |
| ໂດລາສະຫະລັດ | 0,25% - 2,00% |
| ໄທບາດ | 0,50% - 2,50% |

## 14. ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ

ກ. ຈັດຕາມປະເພດຂອງເງິນຝາກ

| | 2019<br>*(ລ້ານກີບ)* |
|---|---|
| ເງິນຕາມຮຽກເກັບ | 1.739 |
| ເງິນຝາກອື່ນໆ | 79.740 |
| | **81.479** |

ຂ. ຈັດປະເພດຕາມທີ່ຢູ່ອາໃສ

| | 2019<br>*(ລ້ານກີບ)* |
|---|---|
| ພາຍໃນປະເທດ | 79.740 |
| ຕ່າງປະເທດ | 1.739 |
| | **81.479** |

ຄ. ຈັດປະເພດຕາມສະກຸນເງິນ

| | 2019<br>*(ລ້ານກີບ)* |
|---|---|
| ໂດລາສະຫະລັດ | 72,480 |
| ໄທບາດ | 8.999 |
| | **81.479** |

## 15. ໜີ້ສິນທາງອາກອນ

| | 2019 (ລ້ານກີບ) |
|---|---|
| ອາກອນກຳໄລ | 4.416 |
| ອາກອນມູນຄ່າເພີ່ມ | 280 |
| ອາກອນຫັກໄວ້ນະທີ່ຈ່າຍ | 18 |
| ອາກອນເງິນສະຫວັດດີການ | 103 |
| | **4.817** |

## 16. ໜີ້ສິນອື່ນໆ

| | ບົດ ອະທິບາຍ | 2019 (ລ້ານກີບ) |
|---|---|---|
| ລາຍຮັບຮັບລ່ວງໜ້າ | | 217 |
| ໜີ້ຕ້ອງຈ່າຍໃຫ້ບຸກຄະລາກອນ | | 666 |
| ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ | | 893 |
| ໜີ້ຕ້ອງຈ່າຍອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ | *24* | 153.272 |
| ໜີ້ຕ້ອງຈ່າຍອື່ນໆ | | 115.894 |
| | | **270.942** |

ຍອດເບື້ອງຕົ້ນຂອງເງິນກູ້ມີມູນຄ່າ 279.803 ລ້ານກີບ. ພາຍໃນປີ ສາຂາໄດ້ຈ່າຍເງິນກູ້ມູນຄ່າ 126.531 ລ້ານກີບ. ເງິນກູ້ດັ່ງກ່າວມີອັດຕາດອກເບ້ຍ 3,17 ເປີເຊັນຕໍ່ປີ. ເງິນກູ້ແມ່ນໄດ້ຖືກນຳໃຊ້ສຳຫລັບຈັດຊື້ຊັບສິນໃຫ້ສາຂາ.

## 17. ທຶນຈົດທະບຽນຖອກແລ້ວ

ການເຄື່ອນໄຫວຂອງທຶນຈົດທະບຽນຖອກແລ້ວໃນລະຫວ່າງປີແມ່ນໄດ້ສະແດງດັ່ງລຸ່ມນີ້:

| | 2019 (ລ້ານກີບ) |
|---|---|
| ຍອດໂອນໃນປີ | 150.000 |
| ຍອດເຫຼືອໃນວັນທີ 31 ທັນວາ | **150.000** |
| ລວມເງິນທຶນທີ່ປະກອບສ່ວນຕາມກົດໝາຍ | **150.000** |

*ອີງຕາມອະທິບາຍເລກທີ 1 ເຊິ່ງອະທິບາຍເຖິງການໂອນທຶນ

## 18. ຄັງສຳຮອງຕາມລະບຽບການ

ຄັງສຳຮອງຕາມລະບຽບການຕ້ອງໄດ້ຮັກສາໄວ້ໃນອັດຕາຢ່າງໜ້ອຍ 10% ຂອງກຳໄລໃນປີ ເພື່ອປະຕິບັດຕາມຂໍ້ກຳນົດຂອງ ທຫລ. ສາຂາບັນທຶກກຳໄລສຳລັບປີ 30.808 ລ້ານກີບ ສະນັ້ນ, ສາຂາໄດ້ບັນທຶກຄັງສຳຮອງຕາມກົດໝາຍຈຳນວນ 3,081 ລ້ານກີບ ສຳລັບປີທີ່ສິ້ນສຸດໃນວັນທີ 31 ທັນວາ 2019.

## 19. ລາຍຮັບດອກເບ້ຍ

| | 2019<br>*(ລ້ານກີບ)* |
|---|---|
| ດອກເບ້ຍເງິນຝາກ ແລະ ຮັບລ່ວງໜ້າ | |
| ເງິນເບີກເກີນບັນຊີ | 177 |
| ເງິນຝາກມີກຳນົດ | 12.800 |
| | **12.977** |

## 20. ລາຍຈ່າຍດອກເບ້ຍ

| | 2019<br>*(ລ້ານກີບ)* |
|---|---|
| ດອກເບ້ຍເງິນຝາກ ແລະ ຮັບລ່ວງໜ້າ | |
| ເງິນຝາກປະຢັດ | 565 |
| ເງິນຝາກມີກຳນົດ | 480 |
| | **1.045** |

## 21. ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ, ສຸດທິ

| | 2019<br>*(ລ້ານກີບ)* |
|---|---|
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | |
| ຄ່າທຳນຽມທີ່ກ່ຽວກັບເງິນໃຫ້ກູ້ຢືມ | 352 |
| ຄ່າທຳນຽມ - ບັນຊີກະແສລາຍວັນ | 4 |
| ຄ່າບໍລິການ ລະຫວ່າງປະເທດ | 3.003 |
| ຄ່າທຳນຽມ ແລະ ຄ່າບໍລິການອື່ນໆ | 342 |
| ລວມລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | **3.701** |

| | |
|---|---|
| ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | |
| ຄ່າທຳນຽມທະນາຄານ | (384) |
| ຄ່າທຳນຽມ - ບັນຊີກະແສລາຍວັນ | (13) |
| **ລວມລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ** | **(397)** |
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ, ສຸດທິ** | **3.304** |

## 22. ອາກອນກຳໄລ

*ການຮັບຮູ້ອາກອນກຳໄລ ໃນກຳໄລ ຫຼື ຂາດທຶນ*

| | ບົດ ອະທິບາຍ | ວັນທີ 8 ມີນາ ຫາ 31 ທັນວາ 2019 *(ລ້ານກີບ)* |
|---|---|---|
| **ລາຍຈ່າຍອາກອນ ໃນປະຈຸບັນ** | | |
| ໃນປີ | | (4.664) |
| ຄ່າໃຊ້ຈ່າຍອາກອນຄ້າງຈ່າຍສຳຮອງ | | |
| **ລາຍຈ່າຍອາກອນເຍື້ອນຊຳລະ (ຜົນປະໂຫຍດ)** | | |
| ລາຍການເຄື່ອນໄຫວຜົດດ່ຽງຊື່ວຄາວ | *11* | (5.217) |
| **ລວມລາຍຈ່າຍອາກອນກຳໄລ(ຜົນປະໂຫຍດ)** | | **(9.881)** |

*ສົມທຽບອັດຕາອາກອນທີ່ມີຜົນບັງຄັບໃຊ້*

| | ອັດຕາ % | ວັນທີ 8 ມີນາ ຫາ 31 ທັນວາ 2019 *(ລ້ານກີບ)* |
|---|---|---|
| ກຳໄລກ່ອນຈ່າຍອາກອນກຳໄລ | | 40.689 |
| ອັດຕາອາກອນກຳໄລທີ່ໃຊ້ຢູ່ໃນ ສປປ ລາວ | 24 | (9.766) |
| ອື່ນໆ | | (115) |
| | **24%** | **(9.881)** |

ລາຍຈ່າຍອາກອນກຳໄລແມ່ນຄິດໄລ່ໃນອັດຕາ 24% ຂອງກຳໄລທີ່ຖືກອາກອນ. ການຄິດໄລ່ອາກອນກຳໄລ ແມ່ນຕ້ອງໄດ້ຮັບການກວດກາ ແລະ ອະນຸມັດໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

## 23. ເງິນສົດ ແລະ ທຽບເທົ່າເງິນສົດ

| | ບົດ ອະທິບາຍ | 2019 *(ລ້ານກີບ)* |
|---|---|---|
| ເງິນສົດ | 5 | 5.231 |
| ໜີ້ຕ້ອງຮັບຈາກ ທຫລ | | 17.977 |
| ໜີ້ຕ້ອງຮັບຈາກສໍານັກງານໃຫຍ່ ແລະ ສາຂາອື່ນ | | 293.803 |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | | 199.056 |
| | | **516.067** |

## 24. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງປະກອບດ້ວຍການເຄື່ອນໄຫວທີ່ທັງໝົດທີ່ດໍາເນີນງານໂດຍຜ່ານພາກສ່ວນອື່ນທີ່ກ່ຽວຂ້ອງກັບສາຂາ. ພາກສ່ວນນັ້ນຈະກ່ຽວຂ້ອງກັບສາຂາຖ້າຫາກວ່າ:

(ກ) ມີການພົວພັນທາງກົງ ຫຼື ທາງອ້ອມໂດຍຜ່ານພາກສ່ວນໜຶ່ງ ຫຼື ຫຼາຍພາກສ່ວນທີ່ກ່ຽວຂ້ອງ:

- ຄວບຄຸມ, ຖືກຄວບຄຸມ ຫຼື ຢູ່ພາຍໃຕ້ການຄວບຄຸມດຽວກັນກັບສາຂາ (ໃນນີ້ລວມມີບໍລິສັດແມ່, ບໍລິສັດຍ່ອຍ ແລະ ສະມາຊິກຂອງບໍລິສັດຍ່ອຍ);
- ມີສ່ວນໄດ້ເສຍໃນສາຂາທີ່ມີອິດທິພົນສູງກວ່າສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມສາຂາ.

(ຂ) ພາກສ່ວນທີ່ເປັນຜູ້ຮ່ວມທຶນເຊິ່ງໃນນັ້ນສາຂາເປັນຮຸ້ນສ່ວນ;

(ຄ) ບຸກຄົນນັ້ນເປັນສະມາຊິກຄົນສໍາຄັນໃນຄະນະຜູ້ບໍລິຫານຂອງສາຂາ ຫຼື ບໍລິສັດແມ່;

(ງ) ບຸກຄົນນັ້ນເປັນສະມາຊິກໃນຄອບຄົວຂອງບຸກຄົນໃດໜຶ່ງ ທີ່ອ້າງເຖິງໃນຂໍ້ (ກ) ຫຼື (ງ);

(ຈ) ພາກສ່ວນທີ່ເປັນຂອງທະນາຄານຄຸ້ມຄອງດູແລ, ຄວບຄຸມຮ່ວມກັນ, ຫຼື ມີອິດທິພົນສູງ ຫຼື ອໍານາດໃນການລົງຄະແນນຢ່າງມີສາລະສໍາຄັນໃນທະນາຄານ ດັ່ງກ່າວ ທີ່ມີສ່ວນກ່ຽວຂ້ອງໂດຍທາງກົງ ຫຼື ທາງອ້ອມ ຫຼື ບຸກຄົນໃດໜຶ່ງທີ່ອ້າງເຖິງໃນຂໍ້ (ຄ) ຫຼື (ງ); ຫຼື

(ສ) ບຸກຄົນທີ່ຢູ່ໃນແຜນການຜົນປະໂຫຍດຂອງພະນັກງານຫຼັງອອກຈາກທະນາຄານ, ຫຼື ຂອງທະນາຄານອື່ນ ທີ່ເປັນພາກສ່ວນກ່ຽວຂ້ອງກັບທະນາຄານ.

ລາຍການເຄື່ອນໄຫວທີ່ມີສາລະສຳຄັນ ກຳໄລ ແລະ ຂາດທຶນ ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

| ພາກສ່ວນທີ່ກ່ຽວຂ້ອງ | ສາຍພົວພັນ | ການເຄື່ອນໄຫວ | ວັນທີ 8 ມີນາ ຫາ 31 ທັນວາ 2019 *(ລ້ານກີບ)* |
|---|---|---|---|
| ທະນາຄານ ເອເອັນແຊັດ - ສິງກະໂປ | ກຸ່ມທຸລະກິດ | ລາຍຮັບດອກເບ້ຍ | 459 |
| ທະນາຄານ ເອເອັນແຊັດ(ລາວ) - ທຸລະກິດຍ່ອຍ | ກຸ່ມທຸລະກິດຍ່ອຍ | ລາຍຈ່າຍດອກເບ້ຍ | 1.234 |
| ທະນາຄານ ເອເອັນແຊັດ - ເມລເບີລ | ສຳນັກງານໃຫຍ່ | ລາຍຈ່າຍກຸ່ມຕ່າງປະເທດ | 1.691 |
| ທະນາຄານ ເອເອັນແຊັດ- ສູນກາງມະນີລາ | ກຸ່ມທຸລະກິດ | ລາຍຈ່າຍກຸ່ມຕ່າງປະເທດ | 128 |
| ທະນາຄານ ເອເອັນແຊັດ- ສູນກາງບັງກະລໍ່ | ກຸ່ມທຸລະກິດ | ລາຍຈ່າຍກຸ່ມຕ່າງປະເທດ | 118 |
| ບໍລິສັດ ເອເອັນແຊັດ- ປາຊີຟິກ ຈຳກັດ | ກຸ່ມທຸລະກິດ | ລາຍຈ່າຍກຸ່ມຕ່າງປະເທດ | 29 |

*ເບິ່ງເພີ່ມເຕີມຈາກເອກະສານຊ້ອນທ້າຍທີ່ 1 ແລະ 16 ສຳຫລັບພາກສ່ວນທີ່ກ່ຽວຂ້ອງ.

ຍອດເຫຼືອທີ່ມີສາລະສຳຄັນກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

| ພາກສ່ວນທີ່ກ່ຽວຂ້ອງ | ການກ່ຽວຂ້ອງ | ການກ່ຽວຂ້ອງ | 2019 *(ລ້ານກີບ)* |
|---|---|---|---|
| ທະນາຄານ ເອເອັນແຊັດ - ສິງກະໂປ | ກຸ່ມທຸລະກິດ | ຊັບສິນ-ໜີ້ຕ້ອງຮັບ | 291.803 |
| ທະນາຄານ ເອເອັນແຊັດ(ລາວ) - ທຸລະກິດຍ່ອຍ* | ກຸ່ມທຸລະກິດຍ່ອຍ | ໜີ້ສິນ-ໜີ້ຕ້ອງສົ່ງ | 152.287 |
| ທະນາຄານ ເອເອັນແຊັດ - ເມລເບີລ | ສຳນັກງານໃຫຍ່ | ໜີ້ສິນ-ໜີ້ຕ້ອງສົ່ງ | 916 |
| ທະນາຄານ ເອເອັນແຊັດ- ສູນກາງມະນີລາ | ກຸ່ມທຸລະກິດ | ໜີ້ສິນ-ໜີ້ຕ້ອງສົ່ງ | 69 |

ຄ່າຕອບແທນໃຫ້ແກ່ຄະນະອຳນວຍການ ແລະ ຄະນະຜູ້ບໍລິຫານມີດັ່ງນີ້:

| | ວັນທີ 8 ມີນາ ຫາ 31 ທັນວາ 2019 (ລ້ານກີບ) |
|---|---|
| ເງິນເດືອນ | 4.868 |
| ເງິນໂບນັດ | 1.133 |
| ເງິນອຸດໜູນອື່ນໆ | 741 |
| | **6.742** |

## 25. ພາລະຜູກພັນ

ໃນພາກປະຕິບັດຂອງການດຳເນີນທຸລະກິດ, ທາງສາຂາໄດ້ມີພາລະຜູກພັນຕ່າງໆ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນທີ່ແນ່ນອນທາງດ້ານກົດໝາຍໃຫ້ກັບລູກຄ້າຂອງຕົນ. ຄາດວ່າຈະບໍ່ເກີດຄວາມເສຍຫາຍທີ່ມີສາລະສຳຄັນ ຈາກລາຍການດັ່ງກ່າວ ຊຶ່ງປະກອບດ້ວຍ:

| | 2019 |
|---|---|
| | *(ລ້ານກີບ)* |
| ໜັງສືຄ້ຳປະກັນທີ່ຍັງຄ້າງຊຳລະ | 1.391 |
| ໜັງສືສິນເຊື່ອທີ່ຍັງຄ້າງຊຳລະ | 10.775 |
| ຂໍ້ຜູກພັນທາງສັນຍາອື່ນໆ | 756.702 |
| | **768.868** |

## 26. ການຂາຍຊັບສິນ

ສາຂາໄດ້ຂາຍຕຶກອາຄານໃຫ້ ບໍລິສັດ ອາລີອັນສ໌ ປະກັນໄພລາວ ພາຍໃຕ້ຂໍ້ຕົກລົງ ລົງວັນທີ 16 ທັນວາ 2019. ມູນຄ່າຂາຍທີ່ໄດ້ຈາກການຂາຍຊັບສິນແມ່ນ 57.889 ລ້ານກີບ ທຽບໃສ່ມູນຄ່າຍຸດຕິທຳ 5.931 ລ້ານກີບ, ກຳໄລສຸດທິຈາກການຂາຍຊັບສິນ ຈຳນວນ 51.958 ລ້ານກີບແມ່ນ ບັນທຶກໃນລາຍງານຜົນການດຳເນີນງານ. ອາຄານຫລັງນີ້ໄດ້ຖືກຈັດປະເພດໄວ້ເພື່ອຂາຍພາຍໃຕ້ການລາຍງານການເງິນຂອງທະນາຄານ.

## 27. ເຫດການເກີດຂຶ້ນພາຍຫຼັງ

ນອກເໜືອຈາກຂໍ້ມູນທີ່ເປີດເຜີຍຢູ່ໃນເອກະສານລາຍງານການເງິນແລ້ວ, ໃນວັນທີລາຍງານ, ບໍ່ມີເຫດການທີ່ເກີດຂຶ້ນ ພາຍຫຼັງຈາກວັນທີ 31 ທັນວາ 2019 ທີ່ສົ່ງຜົນກະທົບສຳຄັນຕໍ່ກັບຖານະການເງິນຂອງບໍລິສັດໃນວັນທີ 31 ທັນວາ 2019.